# ຜູ້ແທນປະຊາຊົນ
# PHOUTHEN PASAXON

09-12 ກຸມພາ 2022
ປີທີ 11
ສະບັບທີ 818

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເດີ່ນທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com


## ປະທານ ສພຊ ເຄື່ອນໄຫວວຽກງານ ຢູ່ແຂວງຫລວງພະບາງ



(ສພຊ) ລະຫວ່າງວັນທີ 5-7 ກຸມພາ 2022 ທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ (ສພຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫລວງພະບາງ ເຊິ່ງໄດ້ເຄື່ອນໄຫວຮ່ວມກັບອົງການປົກຄອງແຂວງ ຢູ່ຫ້ອງປະຊຸມໃຫຍ່ຫ້ອງວ່າການປົກຄອງ

ອ່ານຕໍ່ໜ້າ 2

## ຢ້ຽມຢາມ, ຊຸກຍູ້ການຜະລິດ ຢູ່ເມືອງຫາດຊາຍຟອງ



ໜ້າ 3

## ປະກາດກົງຈັກການຈັດຕັ້ງ ພາຍໃນສະພາແຫ່ງຊາດ




(ສພຊ) ວັນທີ 4 ກຸມພາຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ມີພິທີປະກາດກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງສະຫາຍນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາປະທານ-ຮອງປະທານກຳມາທິການ, ຫົວໜ້າ-ຮອງຫົວໜ້າກົມ

ອ່ານຕໍ່ໜ້າ 2

## ຮອງປະທານ ສພຊ ເຄື່ອນໄຫວ ວຽກງານຢູ່ແຂວງຊຽງຂວາງ



ໜ້າ 3

## ສະຫລຸບຕີລາຄາວຽກງານ ປະຈຳປີ 2021 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 6



(ສພຊ) ວັນທີ 24 ມັງກອນຜ່ານມາ, ທີ່ຫ້ອງປະຊຸມໃຫຍ່ ສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ, ທ່ານນາງ ມະນີວັນ ເຢຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງຫລວງພະບາງ ໄດ້ເຂົ້າຮ່ວມກອງປະຊຸມຄົບຄະນະປະຈຳປີ 2021 ຂອງຄະນະ ສສຊ ປະຈຳ

ອ່ານຕໍ່ໜ້າ 2

## ປະດັບຫລຽນໄຊແຮງງານຊັ້ນ II ໃຫ້ຜູ້ທີ່ມີຜົນງານດີເດັ່ນ



(ສພຊ) ໃນໂອກາດດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ຊຸດທີ II, ໃນວັນທີ 25 ມັງກອນຜ່ານມາ, ທີ່ຫ້ອງປະຊຸມໃຫຍ່ແຂວງຫລວງພະບາງ ໄດ້ມີພິທີປະດັບຫລຽນໄຊແຮງງານຊັ້ນ II ໃຫ້ທ່ານ ສີນາວາ ສຸພານຸວົງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງຫລວງພະບາງ ເຊິ່ງຕາງໜ້ານາຍົກລັດຖະມົນຕີປະດັບຫລຽນໂດຍທ່ານ ຄຳຂັນ ຈັນທະວີສຸກ ເຈົ້າແຂວງໆຫລວງພະບາງ, ເຂົ້າຮ່ວມພິທີດັ່ງກ່າວມີປະທານ-ຮອງປະທານ ສພຂ, ມີ ສສຊ ປະຈຳເຂດເລືອກຕັ້ງທີ 6, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ອະດີດການນຳແຂວງ.

ການມອບຫລຽນໄຊແຮງງານຊັ້ນ II ໃນຄັ້ງນີ້, ກໍເພື່ອເປັນການສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ທ່ານ ສີນາວາ ສຸພານຸວົງ ໄດ້ມີຜົນງານ

ອ່ານຕໍ່ໜ້າ 3

## ກອງປະຊຸມຄົບຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 9



(ສພຊ) ວັນທີ 24 ມັງກອນຜ່ານມາ, ທີ່ຫ້ອງປະຊຸມຫ້ອງວ່າການແຂວງຊຽງຂວາງ, ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ

ອ່ານຕໍ່ໜ້າ 3



## ປະທານ...

ແຂວງຫລວງພະບາງ ໂດຍມີທ່ານ ຄຳຂັນ ຈັນທະວິສຸກ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆຫລວງພະບາງ; ມີຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ກຳມະການພັກແຂວງ, ບັນດາຫົວໜ້າພະແນກການເຂົ້າຮ່ວມ.

ໂອກາດດັ່ງກ່າວ ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ ຈາກທ່ານ ຄຳຂັນ ຈັນທະວິສຸກ ກ່ຽວກັບການ ເຄື່ອນໄຫວວຽກງານຂອງແຂວງວ່າ: ໃນໜຶ່ງປີຜ່ານມາ ສຳລັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ມ້າງກຸ່ມແກ໊ງ, ເຄືອຂ່າຍຄ້າຂາຍຢາເສບຕິດລາຍໃຫຍ່-ນ້ອຍໄດ້ 131 ລາຍ, ກັກຕົວ 195 ຄົນ ຍິງ 20 ຄົນ, ຍຶດຂອງກາງຢາເສບຕິດໄດ້ 3.702.657 ເມັດ, ຢາຝິ່ນ 11.018,9 ກິໂລກຣາມ, ເຮໂລອີນ 4.703,8 ກຣາມ, ແກ້ໄຂບ້ານ, ຄອບຄົວທີ່ລະເມີດການປູກຝິ່ນ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມຫລຸດລົງເປັນກ້າວໆ. ກ່ຽວກັບສະພາບລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນປີ 2011 ຈັງຫວະການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນລະດັບ 3,6%, ຫລຸດຄາດໝາຍມະຕິສະພາ 0,9% (ຮັບຮອງ 4,5%), ການລົງທຶນຂອງລັດ ທັງໝົດ 210 ໂຄງການ, ມູນຄ່າ 24,58 ຕື້ກີບ, ໄດ້ຮັບການຈັດຕັ້ງປະຕິບັດຕາມລະບຽບການກ່ຽວຂ້ອງກຳນົດ, ການລົງທຶນຂອງພາກເອກະຊົນ ປະຕິບັດໄດ້ 304 ຫົວໜ່ວຍ, ມູນຄ່າທຶນຈົດທະບຽນທັງໝົດ 1.626,85 ຕື້ກີບ, ລື່ນແຜນການປີ 76,69% (920,72 ຕື້ກີບ), ໃນນັ້ນ ການລົງທຶນຂອງຕ່າງປະເທດມີ 9 ໂຄງການ, ມູນຄ່າ 185,86 ຕື້ກີບ. ນອກຈາກນັ້ນ, ຍັງໄດ້ຍົກໃຫ້ເຫັນບັນຫາທີ່ຄົງຄ້າງ ແລະ ແຜນຈຸດສຸມພັດທະນາເສດຖະກິດ-ສັງຄົມ ໃນປີ 2022 ແລະ ມີຂໍ້ສະເໜີຈຳນວນໜຶ່ງຄື: 1. ສະເໜີ ຊ່ວຍຊຸກຍູ້ໂຄງການສ້າງຂົວຂ້າມນ້ຳຂອງ ນະຄອນຫລວງພະບາງ ຫາເມືອງຈອມເພັດ ເຊື່ອມຕໍ່ເສັ້ນທາງແຂວງຫລວງພະບາງ ຫາເມືອງທົ່ງສາແຂວງໄຊຍະບູລີ ອອກໄປສູ່ປະເທດໄທ; 2. ສະເໜີ ຊ່ວຍຊຸກຍູ້ ໂຄງການກໍ່ສ້າງເສັ້ນທາງ ແຕ່ພູທິດເຜີ້ງ-ຊາຍແດນແຂວງດຽນບຽນ ສສ.ຫວຽດນາມ ມີຄວາມຍາວ 107 ກິໂລແມັດ; 3. ສະເໜີ ຊ່ວຍຊຸກຍູ້ ໂຄງການກໍ່ສ້າງເສັ້ນທາງແຕ່ເມືອງໂພນໄຊ ຫາຊາຍແດນເມືອງພູກູດ ແຂວງຊຽງຂວາງ ມີຄວາມຍາວ 83 ກິໂລແມັດ.

ທ່ານ ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ຜ່ານການຮັບຟັງລາຍງານຂອງ ເລຂາພັກແຂວງ, ເຈົ້າແຂວງໆຫລວງພະບາງ ເຫັນວ່າ ໃນໄລຍະ 1 ປີກວ່າທີ່ຜ່ານມາ ຄະນະພັກແຂວງ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງຫລວງພະບາງ ກໍໄດ້ເອົາໃຈໃສ່ນຳພາ ຊີ້ນຳບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ລວມທັງປະຊາຊົນບັນດາເຜົ່າຂອງແຂວງຫລວງພະບາງ ພ້ອມກັນຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ, ມະຕິກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ VIII ຂອງອົງຄະນະພັກແຂວງຫລວງພະບາງ, ມະຕິກອງປະຊຸມສະພາປະຊາຊົນແຂວງຫລວງພະບາງເຂົ້າໃນການ ເຄື່ອນໄຫວວຽກງານຂອງບັນດາຂະແໜງການ ແລະ ພ້ອມກັນສູ້ຊົນຈັດຕັ້ງປະຕິບັດ ມີຜົນສຳເລັດຫລາຍດ້ານ ເຮັດໃຫ້ການສ້າງສາພັດທະນາເສດຖະກິດ-ສັງຄົມຂອງແຂວງຫລວງພະບາງ ສືບຕໍ່ມີບາດກ້າວຂະຫຍາຍຕົວ, ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກລະດັບດີຂຶ້ນເປັນກ້າວໆ. ພິເສດ ໃນໄລຍະ 1 ປີກວ່າຜ່ານມາ ເຮັດໃຫ້ແຂວງຂອງພວກເຮົາສຳເລັດວຽກງານສຳຄັນຫລາຍດ້ານ ເປັນຕົ້ນການດຳເນີນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ VIII ຂອງອົງຄະນະພັກແຂວງ, ການດຳເນີນກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງຫລວງພະບາງ ຊຸດທີ II ໄດ້ຮັບຜົນສຳເລັດ ເຊິ່ງເປັນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ໃນການເພີ່ມທະວີການນຳພາ ຊີ້ນຳຂອງຄະນະພັກ ເຂົ້າໃນການບູລະນະລະບົບອຳນາດລັດໃຫ້ມີຄວາມໜັກແໜ້ນເຂັ້ມແຂງ; ພ້ອມທັງຈັດຕັ້ງປະຕິບັດສອງວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໄດ້ເປັນຮູບປະທຳຫລາຍຂຶ້ນ; ໄດ້ນຳພາພໍ່ແມ່ປະຊາຊົນ ຈັດຕັ້ງປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ-19 ທີ່ລັດຖະບານວາງອອກ ເຊິ່ງເຮັດໃຫ້ສະພາບການຫລຸດຜ່ອນລົງເປັນກ້າວໆ; ໄດ້ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງບັນດາເຜົ່າ ເພື່ອດຶງດູດຈິດໃຈຂອງຊາວໂລກ ໃຫ້ມາທ່ອງທ່ຽວຫລວງພະບາງເມືອງມໍລະດົກໂລກ ນັບມື້ເພີ່ມຂຶ້ນ. ໃນໂອກາດທີ່ສຳຄັນນີ້, ຕາງໜ້າໃຫ້ກົມການເມືອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ ຂໍຍ້ອງຍໍຊົມເຊີຍຕໍ່ຄວາມເອົາໃຈໃສ່ຂອງຄະນະພັກແຂວງ, ສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6, ອົງການປົກຄອງແຂວງ, ບັນດາພະແນກການຂອງແຂວງ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ປະຊາຊົນບັນດາເຜົ່າແຂວງຫລວງພະບາງທຸກທົ່ວໜ້າ ທີ່ໄດ້ພ້ອມພຽງເປັນຈິດໜຶ່ງໃຈດຽວ ເຮັດສຳເລັດໜ້າທີ່ວຽກງານອັນສຳຄັນ ເຮັດໃຫ້ແຂວງຫລວງພະບາງ ມີບາດກ້າວຫັນປ່ຽນຢ່າງຕັ້ງໜ້າ, ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໄດ້ຮັບການປັບປຸງດີຂຶ້ນ. ປີ 2022 ເປັນປີທີສອງຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍຄືມະຕິກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ VIII ຂອງອົງຄະນະພັກແຂວງຫລວງພະບາງ, ເປັນປີທີ່ບັນດາອົງຄະນະພັກແຕ່ລະຂັ້ນ ທັງສູນກາງ ແລະ ທ້ອງຖິ່ນ ພ້ອມກັນເພີ່ມທະວີການນຳພາ ຊີ້ນຳຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນທີ່ສະສົມມາເປັນເວລາຫລາຍປີ, ວາລະແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ເຊິ່ງເປັນປາກົດການຫຍໍ້ທໍ້ ແລະ ເປັນໄພອັນຕະລາຍຕໍ່ສັງຄົມ ໃຫ້ໄດ້ຮັບການແກ້ໄຂຕາມຄາດໝາຍ ແລະ ແຜນການທີ່ວາງໄວ້. ເພື່ອເຮັດສຳເລັດໜ້າທີ່ການເມືອງອັນໃຫຍ່ຫລວງ ແລະ ມີຄວາມສຳຄັນດັ່ງກ່າວບັນລຸຜົນສຳເລັດ ສິ່ງສຳຄັນແມ່ນ ຄະນະພັກ ກໍຄືອຳນາດການປົກຄອງແຕ່ລະຂັ້ນ ທັງສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະແຂວງຫລວງພະບາງ ເຊິ່ງເປັນແຂວງໜຶ່ງທີ່ເປັນກຳລັງແຮງຂອງສູນກາງໃນຫລາຍດ້ານ ໂດຍສະເພາະທ່າແຮງດ້ານການທ່ອງທ່ຽວ, ການຜະລິດກະສິກຳເປັນສິນຄ້າ ຈະຕ້ອງໄດ້ເພີ່ມທະວີຄວາມສາມັກຄີພາຍໃນເປັນປຶກແຜ່ນ, ບຸກບືນສູ້ຊົນຈັດຕັ້ງປະຕິບັດບັນດາວຽກງານ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຫລວງພະບາງ ໃຫ້ບັນລຸຕາມແຜນການ ແລະ ມີປະສິດທິຜົນ.

ໃນການເຄື່ອນໄຫວວຽກງານຄັ້ງນີ້ ຄະນະ ໄດ້ຢ້ຽມຊົມຕາດກວາງຊີ, ເຮັດວຽກຮ່ວມກັບຄະນະພັກເມືອງໂພນໄຊ ແລະ ມອບເຄື່ອງຊ່ວຍເຫລືອໃຫ້ພະແນກສາທາລະນະສຸກແຂວງ ແລະ ເມືອງໂພນໄຊ. ນອກຈາກນັ້ນ, ຄະນະຍັງໄດ້ຢ້ຽມຢາມໃຫ້ກຳລັງໃຈຄົນເຈັບ ຢູ່ໂຮງໝໍເມືອງໂພນໄຊ ແລະ ຢ້ຽມຢາມໂຄງການຕາຝັ່ງເຈື່ອນເຂດຊຽງທອງ.




## ປະກາດກົງຈັກ...

ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ຈຸດປະສົງເພື່ອປະກາດກົງຈັກພາຍໃນສະພາແຫ່ງຊາດ; ເພື່ອສ້າງຄວາມຮັບຮູ້ ແລະ ຄວາມເປັນເອກະພາບໃຫ້ແກ່ສະມາຊິກພັກ, ພະນັກງານຫລັກແຫລ່ງ ພາຍໃນສະພາແຫ່ງຊາດ.

ຄະນະປະຈຳສະພາແຫ່ງຊາດ ຕົກລົງຮັບຮອງເອົາການແຕ່ງຕັ້ງ ທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ ເປັນຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 13/ຄປຈ.ກວສຊ, ລົງວັນທີ 4 ກຸມພາ 2022 ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນດຳລົງຕຳແໜ່ງຢູ່ສະພາແຫ່ງຊາດ. ໃນພິທີ, ສະຫາຍ ນາງ ປິ່ງຄຳ ລາຊະສົມມາ ກຳມະການສູນກາງພັກ, ກຳມະການຄະນະພັກສະພາແຫ່ງຊາດ ໄດ້ຜ່ານບັນດາເອກະສານທີ່ສຳຄັນຄື: ມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 31/ຄລສພ, ລົງວັນທີ 26 ມັງກອນ 2022 ແລະ ມະຕິສະບັບເລກທີ 26/ຄລສພ, ລົງວັນທີ 25 ມັງກອນ 2022; ແຈ້ງການຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 12/ຄຈສພ ເລື່ອງການແຕ່ງຕັ້ງພະນັກງານການນຳຂັ້ນສູງ ໄປຮັບໜ້າທີ່ໃຫມ່; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 13/ຄປຈ.ກວສຊ, ລົງວັນທີ 4 ກຸມພາ 2022 ວ່າດ້ວຍການຮັບຮອງການແຕ່ງຕັ້ງບຸກຄະລາກອນດຳລົງຕຳແໜ່ງຢູ່ສະພາແຫ່ງຊາດ; ແຈ້ງການເລກທີ 16/ຄລສພ, ລົງວັນທີ 28 ມັງກອນ 2022 ກ່ຽວກັບການປະກາດແຕ່ງຕັ້ງພະນັກງານຂັ້ນສູງ.

ໃນໂອກາດດຽວກັນ, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍ ນາງ ສູນທອນ ໄຊຍະຈັກ ເຊິ່ງສະຫາຍໄດ້ກ່າວວ່າ: ກອງປະຊຸມເທື່ອນີ້ຈຸດປະສົງຫລັກກໍແມ່ນການປະກາດການຈັດຕັ້ງ ພາຍໃນສະພາແຫ່ງຊາດ ເຊິ່ງສະພາແຫ່ງຊາດກໍມີຄວາມຍິນດີຕ້ອນຮັບ ສະຫາຍ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ ທີ່ໄດ້ຍົກຍ້າຍສັບປ່ຽນໜ້າທີ່ມາຮັບໜ້າທີ່ໃໝ່ຢູ່ສະພາແຫ່ງຊາດ ເຊິ່ງຖືວ່າເປັນເລື່ອງປົກກະຕິຂອງລະບົບການຈັດຕັ້ງພັກ-ລັດ ທີ່ຕ້ອງມີການປັບປຸງສັບຊ້ອນໄປຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ ແລະ ແມ່ນຫລັກການອັນໜຶ່ງຂອງພັກເຮົາ ໃນວຽກພະນັກງານ ເພື່ອປະຕິບັດຕາມທິດການຈັດວາງສັບຊ້ອນພະນັກງານ ມີຂຶ້ນ-ມີລົງ, ມີເຂົ້າ-ມີອອກ ແລະ ການສັບປ່ຽນບ່ອນປະຈຳການຂອງພະນັກງານຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ແມ່ນເປັນການຍົກລະດັບການນຳຂັ້ນສູງຜູ້ມີລະດັບຄວາມຮູ້, ຄວາມສາມາດ ມາເຮັດວຽກງານຕົວຈິງຢູ່ສະພາແຫ່ງຊາດ ເຊິ່ງຈະເປັນການເຮັດໃຫ້ວຽກງານຍິ່ງມີປະສິດທິຜົນຂຶ້ນຕື່ມ. ພ້ອມນັ້ນ, ເຊື່ອໝັ້ນວ່າ ສະຫາຍຈະຮ່ວມກັບໝູ່ຄະນະໃນສະພາແຫ່ງຊາດ ສືບຕໍ່ເພີ່ມທະວີຄວາມສາມັກຄີ ເປັນເອກະພາບພາຍໃນຄະນະໜ່ວຍພັກຮາກຖານ, ຄະນະນຳຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ມີການຊີ້ນຳ-ນຳພາ ກຳມາທິການໃຫ້ປະຕິບັດພາລະບົດບາດ, ໜ້າທີ່ຂອງຕົນຢ່າງມີປະສິດທິຜົນ; ສືບຕໍ່ສ້າງໜ່ວຍພັກໃຫ້ມີຄວາມປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ ແລະ ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ ໃນການນຳພາຊີ້ນຳໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ແທດເໝາະກັບສະພາບຕົວຈິງໃນແຕ່ລະໄລຍະ; ປະຕິບັດໜ້າທີ່ການເມືອງທີ່ພັກ-ລັດ ກໍຄືການຈັດຕັ້ງມອບໝາຍໃຫ້ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ດ້ວຍຄວາມຮັບຜິດຊອບ ແລະ ໃຫ້ມີປະສິດທິຜົນສູງ ເຊິ່ງສະພາແຫ່ງຊາດແມ່ນປະຕິບັດ 3 ພາລະບົດບາດໃຫຍ່ ເປັນອົງການນິຕິບັນຍັດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ ແລະ ການປະຕິບັດກົດໝາຍ ຂອງບັນດາອົງການລັດ ເພື່ອເຮັດໃຫ້ສະພາແຫ່ງຊາດ ຊຸດທີ IX ມີໃບໜ້າອັນໃໝ່.

(ສົມນຶກ ແກ້ວໄຊຍະຈັກ)

## ສະຫລຸບ...

ເຂດເລືອກຕັ້ງ ໂດຍການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ, ມີຮອງເຈົ້າແຂວງ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ, ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ແລະ ນະຄອນ, ຕາງໜ້າພະແນກການ ອ້ອມຂ້າງແຂວງເຂົ້າຮ່ວມ.

ໃນກອງປະຊຸມ ທ່ານ ວົງສະຫວັນ ເທບພະຈັນ ໄດ້ກ່າວເປີດກອງປະຊຸມວ່າ: ກອງປະຊຸມຄັ້ງນີ້ ເປັນການສະຫລຸບຕີລາຄາຜົນການເຄື່ອນໄຫວວຽກງານ ປະຈຳປີ 2021 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 6 ພ້ອມທັງກຳນົດທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022; ພ້ອມນັ້ນ, ທ່ານກໍໄດ້ຮຽກຮ້ອງມາຍັງບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 6, ອົງການປົກຄອງແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳຄິດຄຳເຫັນໃສ່ເນື້ອໃນກອງປະຊຸມຢ່າງກົງໄປກົງມາ ເພື່ອປະຕິບັດໜ້າທີ່ການເມືອງຂອງຕົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ. ຈາກນັ້ນ, ທ່ານ ສົມພອນ ສີອຸດົມພັນ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 6 ກໍໄດ້ຜ່ານບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ຈາກນັ້ນ, ສສຊ ປະຈຳເຂດເລືອກຕັ້ງ ໄດ້ສຸມສະຕິປັນຍາ, ຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນໃສ່ບົດລາຍງານຢ່າງກົງໄປກົງມາ ເພື່ອເຮັດໃຫ້ບົດລາຍງານມີຄວາມສົມບູນຍິ່ງຂຶ້ນ.

ກອງປະຊຸມ ໄດ້ເຫັນດີເປັນເອກະພາບ ແລະ ຮັບຮອງເອົາບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ.

(ນາງ ຄຳຫລ້າ ພອນພິລາ)



## ຢ້ຽມຢາມ...

(ສພຊ) ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ຊຸກຍູ້ການຜະລິດພັດທະນາກະສິກຳ ຢູ່ເມືອງຫາດຊາຍຟອງ ໃນຕອນບ່າຍວັນທີ 3 ກຸມພານີ້ ໂດຍການຕ້ອນຮັບຂອງທ່ານ ຮອງເຈົ້າຄອງນະຄອນຫລວງວຽງຈັນ, ມີເຈົ້າເມືອງໆຫາດຊາຍຟອງ, ພະແນການທີ່ກ່ຽວຂ້ອງ ພ້ອມດ້ວຍຕາງໜ້າກຸ່ມຊາວນາເຂົ້າຮ່ວມ.

ໂອກາດລົງເຄື່ອນໄຫວຄັ້ງນີ້ ຄະນະ ໄດ້ຮັບຟັງການລາຍງານໂດຍຫຍໍ້ ກ່ຽວກັບການຜະລິດກະສິກຳເປັນສິນຄ້າ ຢູ່ບໍລິສັດ ພັນເພັດ ພັດທະນາກະສິກຳ ຈຳກັດ ຜູ້ດຽວ ຈາກທ່ານ ທອງສະຫວັນ ມີບຸນ ປະທານບໍລິສັດດັ່ງກ່າວ ເຊິ່ງທ່ານໃຫ້ຮູ້ວ່າ: ບໍລິສັດ ພັນເພັດ ພັດທະນາກະສິກຳ ຈຳກັດ ຜູ້ດຽວ ໄດ້ສ້າງຕັ້ງຂຶ້ນໃນປີ 2008 ກ່ອນການສ້າງຕັ້ງ (ໃນປີ 1987 ), ໄດ້ຊື້ໂຮງສີເຂົ້າຂະໜາດນ້ອຍ 1 ໂຮງມາຕິດຕັ້ງ ເພື່ອຮັບບໍລິການສີເຂົ້າໃຫ້ປະຊາຊົນບ້ານໜອງແຫ້ວ ແລະ ອ້ອມຂ້າງເມືອງຫາດຊາຍຟອງ. ພາຍຫລັງດຳເນີນບໍລິການສີເຂົ້າມາໄດ້ໄລຍະໜຶ່ງ ເຫັນໄດ້ທ່າແຮງຂອງຊາວບ້ານ ແລະ ຄວາມຈຳເປັນຂອງເຂົາເຈົ້າ ຈຶ່ງມີແນວຄິດຢາກເຮັດທັງບໍລິການສີເຂົ້າ ທັງເກັບຊື້ເຂົ້າເປືອກ ນຳຊາວກະສິກອນພາຍໃນນະຄອນຫລວງວຽງຈັນ ແລະຕ່າງແຂວງ ມາປ້ອນໂຮງສີເຂົ້າຂອງຕົນ ແລ້ວສີເຂົ້າສານສົ່ງຂາຍຕາມຮ້ານຄ້າ ແລະ ຕະຫລາດທົ່ວໄປ. ຕໍ່ມາ ເຫັນວ່າກິດຈະກຳດັ່ງກ່າວ ສາມາດດຳເນີນໄປໄດ້ດີພໍສົມຄວນ ບວກໃສ່ຄວາມມັກໃນວິຊາຊີບດ້ານກະສິກຳ ຈຶ່ງໄດ້ທົດລອງຊື້ຝຸ່ນ ແລະ ແນວພັນ ມາປ່ອຍເປັນສິນເຊື່ອໃຫ້ຊາວກະສິກອນຜູ້ທີ່ເຄີຍມາຊື້-ຂາຍ ເຂົ້າເປືອກນຳກັນ ໂດຍເຮັດສັນຍາກູ້ຢືມ ແລະ ຊື້-ຂາຍຮ່ວມກັນ. ຜ່ານການຈັດຕັ້ງປະຕິບັດມາໄລຍະໜຶ່ງ ເຫັນວ່າການດຳເນີນທຸລະກິດໃນຮູບແບບນີ້ດຳເນີນໄປໄດ້ດີ, ຊາວກະສິກອນສ່ວນຫລາຍມີຄວາມພໍໃຈ ແລະ ໃຫ້ຄວາມຮ່ວມມືໃນການປະຕິບັດສັນຍາ, ສາມາດສົ່ງທຶນກູ້ຢືມໄດ້ໃນແຕ່ລະລະດູການ ເຖິງວ່າມີຊາວກະສິກອນຈຳນວນໜຶ່ງບໍ່ສາມາດສົ່ງທຶນຄືນໄດ້ເປັນປົກກະຕິ ຍ້ອນຫລາຍສາເຫດເຊັ່ນ: ສະພາບອາກາດບໍ່ອຳນວຍ, ບາງປີນ້ຳຖ້ວມ ບາງປີແຫ້ງແລ້ງ ເປັນຄອບຄົວທຸກຍາກຂາດເຂີນ ຈຶ່ງບໍ່ສາມາດສົ່ງທຶນຄືນໄດ້ເປັນປົກກະຕິ, ແຕ່ເຖິງແນວໃດກໍຕາມ ດ້ວຍຄວາມມັກການຜະລິດກະສິກຳ, ດ້ວຍຄວາມອົດທົນພະຍາຍາມ ແລະ ອີງໃສ່ບົດຮຽນຈາກການໄປທັດສະນະສຶກສາຢູ່ປະເທດໃກ້ຄຽງ, ຈຶ່ງນຳເອົາບົດຮຽນດັ່ງກ່າວ ມາທົດລອງການນຳໃຊ້ກົນຈັກກະສິກຳເຂົ້າໃນການຜະລິດເຂົ້າ ຢູ່ໃນເນື້ອທີ່ຂອງຕົນເຊັ່ນ: ການກຽມດິນ, ຕົກກ້າ, ປັກດຳ ແລະ ເກັບກ່ຽວ. ຄຽງຄູ່ກັນນັ້ນ ກໍນຳເອົາວິທີການດັ່ງກ່າວ ໄປສົ່ງເສີມຊາວກະສິກອນ ໂດຍຈັດຕັ້ງເປັນເຂດກຸ່ມຜະລິດຢູ່ເມືອງຫາດຊາຍຟອງ. ຜ່ານການທົດລອງ ແລະ ປະຕິບັດຕົວຈິງມາເປັນເວລາ 2-3 ປີ ໂດຍມີການໄລ່ລຽງເສດຖະກິດເຫັນວ່າ ວິທີການດັ່ງກ່າວ ສາມາດເຮັດໃຫ້ຕົ້ນທຶນການຜະລິດເຂົ້າຫລຸດລົງ ທຽບໃສ່ການໃຊ້ແຮງງານຄົນທັງໝົດ. ເມື່ອເປັນຄືແນວນັ້ນ ໂດຍຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ວ່າດ້ວຍການສ້າງບາດກ້າວບຸກທະລຸ ທັງ 4 ດ້ານ, ມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງຄະນະພັກນະຄອນຫລວງວຽງຈັນ ກ່ຽວກັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ດ້ວຍການນຳໃຊ້ກົນຈັກເຂົ້າໃນການຜະລິດ, ການປັບປຸງໄຮ່ນານ້ອຍ ເປັນໄຮ່ນາໃຫຍ່ເທື່ອລະກ້າວ, ການປົດປ່ອຍແຮງງານຂອງຊາວກະສິກອນຈາກການດຳນາ ແລະ ກ່ຽວເຂົ້າດ້ວຍແຮງງານຄົນໃຫ້ຫລຸດລົງ 10% ຕໍ່ປີ, ການສົ່ງເສີມການຜະລິດເຂົ້າຂອງຊາວກະສິກອນໃນຮູບແບບ 2+3. ທາງບໍລິສັດ ຈຶ່ງຕັດສິນໃຈສະເໜີຂໍກູ້ຢືມທຶນນຳລັດຖະບານ ເພື່ອຊື້ກົນຈັກ, ຊື້ໂຮງອົບເຂົ້າ, ກໍ່ສ້າງລະບົບສາງເພື່ອເກັບມ້ຽນ ເພື່ອມາຮັບໃຊ້ການສົ່ງເສີມການຜະລິດໃຫ້ຄົບວົງຈອນ. ຈົນມາຮອດປີ 2013-2014 ຈຶ່ງສາມາດຂະຫຍາຍເນື້ອທີ່ການປູກເຂົ້າເພີ່ມຂຶ້ນ ເຊິ່ງສະແດງອອກໃນແຕ່ລະລະດູການຜະລິດ ຊາວກະສິກອນໄດ້ນຳເອົາເຂົ້າເປືອກມາອົບ ແລະ ຂາຍໃຫ້ບໍລິສັດຫລາຍຂຶ້ນຈົນມາຮອດປັດຈຸບັນ. ຈາກຜົນງານທີ່ໄດ້ກ່າວມານັ້ນ ໃນປີ 2016 ພະແນກກະສິກຳ ແລະ ປ່າໄມ້ ໄດ້ສະເໜີໃຫ້ເປັນຕົວແບບໃນການນຳໃຊ້ເຄື່ອງກົນຈັກ ເຊິ່ງກິດຈະກຳຂອງບໍລິສັດ ແມ່ນເປັນສ່ວນໜຶ່ງທີ່ຊຸກຍູ້ໃຫ້ໂຄງການຄ້ຳປະກັນສະບຽງອາຫານ ແລະ ການຜະລິດເປັນສິນຄ້າຂອງນະຄອນຫລວງວຽງຈັນ ກໍຄືລັດຖະບານ, ໄດ້ຮັບຫລຽນໄຊພັດທະນາຊັ້ນ II, ນອກນັ້ນ ຍັງໄດ້ຮັບກຽດຈາກສູນກາງພັກ ໄປປະກອບຄຳຄິດຄຳເຫັນຕໍ່ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໃນຫົວຂໍ້ "ຕົວແບບໃນການຜະລິດແນວພັນເຂົ້າ, ການປະຕິຮູບໄຮ່ນານ້ອຍ ເປັນໄຮ່ນາໃຫຍ່ ແລະ ການນຳໃຊ້ກົນຈັກເຂົ້າໃນການຜະລິດກະສິກຳ" ນຳອີກ.



## ຮອງປະທານ...

(ສພຊ) ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດດຳລັດ 315/ນຍ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປລາວ ຂອງພາກສ່ວນກ່ຽວຂ້ອງ; ການຈັດຕັ້ງປະຕິບັດຊົນເຜົ່າ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່, ການປົກຄອງທ້ອງຖິ່ນ ຕິດພັນກັບວຽກງານສາມສ້າງ, ວຽກງານແນວໂຮມ ແລະ ອົງການຈັດຕັ້ງມະຫາຊົນ ແລະ ເພື່ອເປັນການເກັບກຳຂໍ້ມູນຕົວຈິງຕາມຄຳຮ້ອງ, ຄຳສະເໜີຂອງປະຊາຊົນ ໃນວັນທີ 3 ກຸມພາ 2022 ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ (ສພຊ), ຜູ້ຊີ້ນຳວຽກງານກຳມາທິການບັນດາເຜົ່າ ແລະ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະຕິດຕາມ ຮ່ວມກັບຄະນະສະພາປະຊາຊົນແຂວງຊຽງຂວາງ ໄດ້ເຄື່ອນໄຫວພົບປະເຮັດວຽກຢູ່ສະໂມສອນເມືອງໝອກ ແຂວງຊຽງຂວາງ ໂດຍໄດ້ຮັບການຕ້ອນຮັບຈາກທ່ານ ບຸນມີ ບຸນຄຳພາ ເຈົ້າເມືອງໆໝອກ ມີບັນດາທ່ານຕາງໜ້າຈາກພະແນກການອ້ອມຂ້າງແຂວງ, ກະສິກຳເມືອງ, ແນວລາວສ້າງຊາດເມືອງ, ຫ້ອງການຕ່າງໆອ້ອມຂ້າງເມືອງ, ຄະນະອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມ.

ໂອກາດດັ່ງກ່າວ ຄະນະໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບການພັດທະນາເສດຖະກິດ-ສັງຄົມເມືອງໝອກ; ວຽກງານກ່ຽວກັບຂົງເຂດກະສິກຳພາຍໃນເມືອງ; ວຽກງານເຜົ່າ ແລະ ສາສະໜາ ຈາກພະແນກພາຍໃນແຂວງ; ວຽກງານຄວາມສາມັກຄີຂອງບັນດາເຜົ່າ ແລະ ສາສະໜາ ຈາກແນວລາວສ້າງຊາດແຂວງ; ວຽກງານປ້ອງກັນຄວາມສະຫງົບແຂວງ, ການປະກອບຄຳເຫັນໃສ່ບົດລາຍງານດັ່ງກ່າວ ຈາກຮອງປະທານສະພາປະຊາຊົນແຂວງຊຽງຂວາງ; ຄຳຄິດຄຳເຫັນຈາກທ່ານຫົວໜ້າກົມກໍ່ສ້າງຮາກຖານການເມືອງກົມໃຫຍ່ການເມືອງກອງທັບກະຊວງປ້ອງກັນປະເທດ; ຄຳຖາມເຈາະຈີ້ມຂອງຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຈາກຕາງໜ້າກຳມາທິການບັນດາເຜົ່າ ຈາກນັ້ນ, ຄະນະ ກໍໄດ້ມອບເຄື່ອງຊ່ວຍເຫລືອຈຳນວນໜຶ່ງ ໃຫ້ອຳນາດການປົກຄອງບ້ານຈະເລີນໃໝ່, ບ້ານນ້ຳຕາກ ແລະ ບ້ານທົ່ງເປີ ເພື່ອນຳໄປແຈກຢາຍໃຫ້ປະຊາຊົນຜູ້ທີ່ມີຄວາມຫຍຸ້ງຍາກຢູ່ພາຍໃນບ້ານຂອງຕົນ.

ກ່ອນໜ້ານີ້ ໃນວັນທີ 2 ກຸມພາຜ່ານມາ ຄະນະ ຍັງໄດ້ເຄື່ອນໄຫວພົບປະກັບຄະນະນຳສູນຜະລິດກະສິກຳເລກ 6 ຄັງວຽງ, ໂດຍໄດ້ຮັບການຕ້ອນຮັບຈາກ ທ່ານ ພັທ. ໂຄລິບ ໄພຈິດ ຫົວໜ້າສູນຜະລິດເລກ 6 ຄັງວຽງ ພ້ອມດ້ວຍອ້າຍນ້ອງທະຫານພາຍໃນສູນ ແລະ ຢ້ຽມຢາມຄະນະໂຮງໝໍຄັງວຽງ 119 ແລະ ມອບເຄື່ອງຊ່ວຍເຫລືອເປັນຕົ້ນແມ່ນເຈວລ້າງມື, ຜ້າອັດປາກ ຈຳນວນໜຶ່ງ ໃຫ້ໂຮງໝໍຄັງວຽງ ເພື່ອນຳໃຊ້ເຂົ້າໃນວຽກງານປ້ອງກັນຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19.

(ສອນສັກ ວັນວິໄຊ)

## ກອງປະຊຸມ...

9 ແຂວງຊຽງຂວາງ ໂດຍການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ໂດຍການເຂົ້າຮ່ວມຂອງທ່ານ ບຸນຈັນ ສິວົງພັນ ເຈົ້າແຂວງໆຊຽງຂວາງ, ມີຄະນະປະຈຳພັກແຂວງ, ຄະນະປະຈຳ ສພຂ, ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ເຈົ້າເມືອງທັງ 7 ເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ.

ທັງນີ້, ກໍເພື່ອເປັນການສະຫລຸບລາຍງານຜົນການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານ ປີ 2022. ໃນໄລຍະຜ່ານມາ ຄະນະ ສສຊ ໄດ້ເຂົ້າຮ່ວມກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດເປັນຕົ້ນ: ດ້ານການເມືອງ, ການປົກຄອງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາແຫ່ງຊາດ, ດ້ານໂຄງປະກອບການຈັດຕັ້ງ ແລະ ສະມາຊິກຂອງລັດຖະບານໃຫ້ສອດຄ່ອງກັບຄວາມເປັນຈິງຂອງປະເທດຊາດ, ລັດຖະທຳມະນູນ, ກົດໝາຍ ແລະ ສອດຄ່ອງຕາມແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ; ໄດ້ທາບທາມຮ່າງກົດໝາຍທີ່ສະພາແຫ່ງຊາດ ແລະ ກະຊວງທີ່ກ່ຽວຂ້ອງສົ່ງມາທາບທາມຢູ່ທ້ອງຖິ່ນ; ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 1 ແລະ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ 7 ເມືອງ; ປະສານສົມທົບກັບ ສພຂ ຄົ້ນຄວ້າໜັງສືສະເໜີຂອງແຂວງ, ລົງຕິດຕາມກວດກາບັນດາໂຄງການທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ປະຊາຊົນ, ຊຸກຍູ້ຕິດຕາມກວດກາການແກ້ໄຂຄຳສະເໜີຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ແລະ ທິດທາງແຜນການໃນຕໍ່ໜ້າ ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ. ສຳລັບແຜນການໃນຕໍ່ໜ້າ ແມ່ນຈະສືບຕໍ່ເຄື່ອນໄຫວວຽກງານຂອງຕົນ ຕາມ 3 ພາລະບົດບາດຄື ດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ, ດ້ານການຕິດຕາມກວດກາ ໃນນັ້ນ, ຍັງຈະສືບຕໍ່ເຂົ້າຮ່ວມກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງສະພາແຫ່ງຊາດ; ເຂົ້າຮ່ວມກອງປະຊຸມທາບທາມຮ່າງກົດໝາຍ, ສືບຕໍ່ຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນໃສ່ບັນດາໂຄງການລົງທຶນຂອງລັດ ແລະ ສືບຕໍ່ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; ລົງຕິດຕາມປົກກະຕິ ຄຽງຄູ່ກັບການລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນແຕ່ລະຄັ້ງ.

ກອງປະຊຸມຍັງໄດ້ຮັບຟັງຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ; ຮັບຟັງບົດລາຍງານຫຍໍ້ກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດຂອງແຂວງ. ຈາກນັ້ນ, ບັນດາທ່ານ ສສຊ ກໍໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫລຸບຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ເພື່ອເຮັດໃຫ້ບົດສະຫລຸບດັ່ງກ່າວມີເນື້ອໃນຄົບຖ້ວນ ແລະ ສົມບູນຍິ່ງຂຶ້ນ.

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນໂອ້ລົມວ່າ: ຂໍຮຽກຮ້ອງມາຍັງ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 9, ຄະນະປະຈຳ ສພຂ, ອົງການປົກຄອງແຂວງ, ບັນດາ ສສຂ ຈົ່ງຮີບຮ້ອນຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມຄັ້ງນີ້ໃຫ້ທົ່ວເຖິງ ແລະ ທັນກັບເວລາ; ຮຽກຮ້ອງມາຍັງອົງການປົກຄອງແຂວງທຸກຂັ້ນ, ຫົວໜ່ວຍທຸລະກິດທັງພາກລັດ-ເອກະຊົນ ແລະ ປະຊາຊົນບັນດາເຜົ່າໃນທົ່ວແຂວງ ຈົ່ງໃຫ້ການຮ່ວມມື, ເປັນເຈົ້າການເຂົ້າຮ່ວມ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

(ນາງ ສຸກສະຫ້ອນ ອິນທະແສງ)

## ປະດັບ...

ດີເດັ່ນ ໃນການປຸກລະດົມຂົນຂວາຍ ແລະ ຜົນງານດັ່ງກ່າວ ປະກອບສ່ວນທຶນຮອນຊ່ວຍເຫລືອແຂວງຫລວງພະບາງໃນໄລຍະຜ່ານມາ ລວມມູນຄ່າ 1 ຕື້ກວ່າກີບ ໂດຍສະເພາະແມ່ນການຊ່ວຍເຫລືອບັນເທົາທຸກໃຫ້ປະຊາຊົນເຂດຫ່າງໄກສອກຫລີກທີ່ຂາດເຂີນ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການແກ້ໄຂຄວາມຫຍຸ້ງຍາກໃຫ້ພໍ່ແມ່ປະຊາຊົນໄດ້ພັດທະນາປະເທດຊາດ ກໍຄືການພັດທະນາແຂວງຫລວງພະບາງເປັນກ້າວໆ.

(ນາງ ຄຳຫລ້າ ພອນພິລາ)



# ກອງປະຊຸມໃຫຍ່ ຄັ້ງທີ VI ຂອງໜ່ວຍພັກ ສພຂ ອຸດົມໄຊ



(ສພຂ) ທ້າຍເດືອນມັງກອນຜ່ານມາ, ທີ່ຫ້ອງປະຊຸມອົງການໄອຍະການປະຊາຊົນແຂວງ ໄດ້ມີກອງປະຊຸມໃຫຍ່ຄັ້ງ VI ຂອງໜ່ວຍພັກສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ພາຍໃຕ້ການເປັນປະທານຂອງສະຫາຍ ຄຳເຜີຍ ງອນວັນຄຳ ເລຂາໜ່ວຍພັກ ສພຂ ອຸດົມໄຊ ໂດຍການເຂົ້າຮ່ວມຂອງສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານ ສພຂ ອຸດົມໄຊ; ມີແຂກເຊີນຈາກໜ່ວຍພັກອ້ອມຂ້າງ ແລະ ສະມາຊິກພັກພາຍໃນໜ່ວຍເຂົ້າຮ່ວມ.

ໃນກອງປະຊຸມ, ໄດ້ສຸມໃສ່ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ ເຊິ່ງສາມາດຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງໜ່ວຍພັກ ສພຂ ອຸດົມໄຊ ໃນໄລຍະ 5 ປີຜ່ານມາ (2016-2020) ມີທັງດ້ານດີຜົນສຳເລັດ ແລະ ດ້ານອ່ອນຂໍ້ຄົງຄ້າງ ທີ່ໄດ້ພ້ອມກັນທົບທວນຄືນຊອກໃຫ້ເຫັນເຖິງສາເຫດ, ບັນຫາ, ຂໍ້ຄົງຄ້າງ ເພື່ອວາງມາດຕະການແກ້ໄຂໃນຕໍ່ໜ້າ ແລະ ກຳນົດທິດທາງແຜນການຈຸດສຸມ ໄລຍະ 5 ປີຕໍ່ໜ້າ (2021-2025) ແນໃສ່ເຮັດໃຫ້ສະມາຊິກພັກ, ພະນັກງານ ມີທັດສະນະຫລັກໝັ້ນທາງດ້ານການເມືອງ-ແນວຄິດ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ; ເຊື່ອໝັ້ນຕໍ່ອຸດົມການ ແລະ ການນຳພາຂອງພັກ; ຖືເອົາວຽກງານຕິດຕາມ, ກວດກາຜົນການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງ, ນິຕິບຸກຄົນ, ການຈັດຕັ້ງ ເພື່ອເຮັດໃຫ້ຖືກຕ້ອງຕາມກົດໝາຍ ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ພິຈາລະນາຮັບຮອງເອົານິຕິກຳ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງອົງການປົກຄອງແຂວງ, ຕົກລົງບັນຫາສຳຄັນຂອງແຂວງ ແລະ ຕິດຕາມ, ກວດກາການເຄົາລົບປະຕິບັດລັດຖະທຳມະນູນ ແລະ ກົດໝາຍ.

ພ້ອມນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ໃຊ້ສິດປະຊາທິປະໄຕຂອງຕົນ ໃນການປ່ອນບັດຄັດເລືອກເອົາຄະນະໜ່ວຍພັກຊຸດໃໝ່ ບົນພື້ນຖານຫລັກການລວມສູນປະຊາທິປະໄຕ ທັງຖືກຕ້ອງສອດຄ່ອງກັບມາດຖານເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກຮັບສະໝັກເລືອກຕັ້ງທັງໝົດ 5 ສະຫາຍ, ເລືອກເອົາ 3 ສະຫາຍ; ຈາກນັ້ນ, ໄດ້ເປີດກອງປະຊຸມຄັ້ງປະຖົມມະລຶກ ໂດຍໄດ້ເລືອກເອົາສະຫາຍ ທອງຄານ ວັດສະດາກອນ ເປັນເລຂາໜ່ວຍພັກ, ສະຫາຍ ນາງ ວັນສີ ພອງມະໄລ ເປັນຮອງເລຂາ ຮັບຜິດຊອບວຽກງານກວດກາໜ່ວຍພັກ ແລະ ສະຫາຍ ທອງໄຊ ທໍ່ຈົງເລ່ຍຈີ ເປັນກຳມະການຄະນະພັກ ເພື່ອສືບຕໍ່ຊີ້ນຳ-ນຳພາວຽກງານພັກໃນຕໍ່ໜ້າ.

ພ້ອມນັ້ນ, ຍັງໄດ້ຮັບຟັງການໂອ້ລົມໃຫ້ທິດເຍືອງທາງໃຫ້ແກ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ VI ຂອງໜ່ວຍພັກ ສພຂ ອຸດົມໄຊ ຈາກສະຫາຍ ຄຳດີ ວົງລ້ອມ ເຊິ່ງສະຫາຍໄດ້ເນັ້ນໜັກໃຫ້ຄະນະພັກຊຸດໃໝ່ສືບຕໍ່ເອົາໃຈໃສ່ໃນການຊີ້ນຳ-ນຳພາ, ວຽກງານພັກພາຍໃນ ສພຂ ໃຫ້ດີຂຶ້ນກວ່າເກົ່າ.

(ແສງພອນ ອິນນະລົງ)



# ສສຂ ມອບເຄື່ອງຊ່ວຍເຫລືອ ເມືອງມຸນລະປະໂມກ



(ສພຊ) ວັນທີ 28 ມັງກອນຜ່ານມາ, ທີ່ສະໂມສອນເມືອງມຸນລະປະໂມກສະມາຊິກສະພາປະຊາຊົນແຂວງ (ສສຂ) ຈຳປາສັກ ໄດ້ນຳເອົາຕຽງນອນພ້ອມເສື່ອພາກສະໜາມ ຈຳນວນ 40 ຊຸດ ມອບໃຫ້ເມືອງມຸນລະປະໂມກ ຕາງໜ້າມອບໂດຍທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ສົມຫວັງ ສິງໂຄດ ສສຂ; ຕາງໜ້າຮັບໂດຍທ່ານ ພົດສະຫົງ ພົມມະວົງສາ ເຈົ້າເມືອງເມືອງມຸນລະປະໂມກ; ມີຄະນະນຳ ແລະ ພະນັກງານ-ລັດຖະກອນພາຍໃນເມືອງເຂົ້າຮ່ວມເປັນສັກຂີພິຍານ ເຊິ່ງເຄື່ອງທີ່ນຳມາມອບໃນຄັ້ງນີ້ ແມ່ນໄດ້ຮັບການຊ່ວຍເຫລືອຈາກມູນນິທິຊົງເຕັກປາກເຊ ແລະ ຮ້ານຕົວແທນຈຳໜ່າຍລົດຮອນດາປາກເຊ.

ໃນພິທີ, ທ່ານ ພົດສະຫົງ ພົມມະວົງສາ ເຈົ້າເມືອງເມືອງມຸນລະປະໂມກ ໄດ້ກ່າວຂອບໃຈຕໍ່ ສສຂ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕໍ່ການຊ່ວຍເຫລືອໃນຄັ້ງນີ້ ແລະ ຈະນຳໃຊ້ເຂົ້າໃນວຽກງານຂອງເມືອງໃຫ້ເກີດຜົນປະໂຫຍດສູງສຸດ.

(ສົມວິຈິດ ໄຊມົນຕີ)

# ສສນວ ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ



(ສພຊ) ວັນທີ 1 ກຸມພາ 2022 ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ (ສສນວ) ຊຸດທີ II ນຳໂດຍທ່ານ ອານຸພາບ ຕຸນາລົມ ປະທານສະພາປະຊາຊົນນະຄອນຫລວງ (ສປນວ) ຊຸດທີ II ພ້ອມດ້ວຍທ່ານ ບຸນເຖິງ ສຸວັນນະສີ ສສນວ ປະຈຳເມືອງຈັນທະບູລີ, ທ່ານ ພັທ. ທອງມີ ພົມມະສອນ ສສນວ; ໄດ້ລົງເຄື່ອນໄຫວພົບປະປະຊາຊົນຢູ່ວັດບ້ານບໍ່ນາງົວ ແລະ ແລະ ວັດຫາຍໂສກ ເມືອງຈັນທະບູລີ ນະຄອນຫລວງວຽງຈັນ ໂດຍການຕ້ອນຮັບຂອງທ່ານ ເພັດສະໄໝ ນັດຜາສຸກ ຮອງເຈົ້າເມືອງເມືອງຈັນທະບູລີ; ມີປະຊາຊົນເຂົ້າຮ່ວມຮັບຟັງທັງໝົດ 113 ຄົນ, ຍິງ 47 ຄົນ.

ການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ຂອງບ້ານ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ຜູ້ເຂົ້າຮ່ວມ ທັງນຳເອົາພາລະບົດບາດໃນການເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສປນວ ຊຸດທີ II ທີ່ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນຕ່າງໆຂອງຊາດ, ຂອງນະຄອນຫລວງວຽງຈັນ ມາເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້, ເຂົ້າໃຈ ແລະ ເຊື່ອມຊຶມ.

ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີ ແລະ ບັນຫາຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ ເຊິ່ງບັນຫາທີ່ປະຊາຊົນຂັດຂ້ອງໝອງໃຈ ແລະ ນຳສະເໜີນັ້ນແມ່ນບັນຫາໄຟຟ້າ ບໍ່ພຽງພໍຕໍ່ນຳໃຊ້, ມາດຕະການແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ບັນຫານ້ຳປະປາທີ່ຍັງບໍ່ພຽງພໍກັບການຊົມໃຊ້, ບັນຫາມົນລະພິດທາງອາກາດ ທີ່ສົ່ງຜົນກະທົບຕໍ່ການດຳລົງຊີວິດ ແລະ ສຸຂະພາບຂອງປະຊາຊົນ, ບັນຫາເສັ້ນທາງຄົມມະນາຄົມ, ບັນຫາຄົນບໍ່ມີທີ່ພັກພາອາໄສ ແລະ ປະກົດການຫຍໍ້ທໍ້ທາງສັງຄົມ ເຊິ່ງບາງບັນຫາກໍຊີ້ແຈງອະທິບາຍໃຫ້ປະຊາຊົນໄດ້ຮັບຊາບກັບທີ່ ແລະບາງບັນຫາກໍໄດ້ເກັບກຳເອົາຄຳສະເໜີຂອງປະຊາຊົນ ເພື່ອນຳໄປສະເໜີພາກສ່ວນກ່ຽວຂ້ອງ ເພື່ອພ້ອມກັນຄົ້ນຄວ້າ, ແກ້ໄຂໃຫ້ແທດເໝາະກັບສະພາບຄວາມເປັນຈິງ ແລະ ທັນເວລາ.

(ນາງ ພອນທິບ ອິນທິລາດ)



# ຕິດຕາມກວດກາການປະຕິບັດບັນດາໂຄງການລົງທຶນຂອງລັດ ປະຈຳປີ 2021



(ສພຊ) ຕອນເຊົ້າວັນທີ 25 ມັງກອນ 2022 ທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ ໄດ້ມີກອງປະຊຸມ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ປະຈຳປີ 2021 ແລະ ໂຄງການສະເໜີໃໝ່ ປະຈຳປີ 2022 ຂອງແຂວງ ໂດຍການເປັນປະທານຂອງທ່ານ ປອ. ແພງສີ ສີລາວົງ ຮອງປະທານ ສພຂ ເຊກອງ, ມີທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານ ສພຂ, ທ່ານ ພົງສະຫວັດ ສິງຫາລາດ ປະທານກຳມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາທ່ານຫົວໜ້າພະແນກ-ຮອງຫົວໜ້າພະແນກການ ພ້ອມດ້ວຍຂະແໜງການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໂຄງການລົງທຶນຂອງລັດ ປະຈຳປີ 2021 ຂອງແຂວງ ມີທັງໝົດ 18 ໂຄງການ ໃນນັ້ນ, ພະແນກແຜນການ ແລະ ການລົງທຶນມີ 3 ໂຄງການ, ພະແນກກະສິກຳ ແລະ ປ່າໄມ້ແຂວງ 7 ໂຄງການ, ພະແນກອຸດສະຫະກຳ ແລະ ການຄ້າ 2 ໂຄງການ, ພະແນກໂຍທາທິການ ແລະ ຂົນສົ່ງ 1 ໂຄງການ, ອົງການກວດກາລັດແຂວງ 1 ໂຄງການ, ອົງການແນວລາວສ້າງຊາດແຂວງ 1 ໂຄງການ, ອົງການກາແດງແຂວງ 1 ໂຄງການ, ພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ 1 ໂຄງການ ແລະ ສະຫະພັນແມ່ຍິງແຂວງ 1 ໂຄງການ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດບັນດາຂັ້ນຕອນ, ຄວາມຄືບໜ້າຂອງໂຄງການ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນດາຂໍ້ຄົງຄ້າງທີ່ຈະໄດ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ບັນລຸຕາມລະດັບຄາດໝາຍ ຈາກພະແນກການ-ຂະແໜງການ ທີ່ເປັນເຈົ້າຂອງໂຄງການ ເຊິ່ງຜົນການຈັດຕັ້ງປະຕິບັດເຫັນວ່າ ໄດ້ດຳເນີນໄປຕາມຂັ້ນຕອນ ແລະ ມີຄວາມຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ, ການຈັດຕັ້ງປະຕິບັດບັນດາໂຄງການແມ່ນມີຄວາມຄືບໜ້າຫລາຍກວ່າ 50% ແລະ ບາງໂຄງການກໍສາມາດປະຕິບັດໄດ້ ສຳເລັດ 100%.

ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງກ່ຽວກັບບັນດາໂຄງການສະເໜີໃໝ່ ປະຈຳປີ 2022 ຂອງແຂວງ (ສະເພາະໂຄງການປະເພດ V ມູນຄ່າ 20 ຕື້ລົງມາ) ມີທັງໝົດ 12 ໂຄງການ ໃນນັ້ນ, ບ້ວງທຶນປົກກະຕິມີ 10 ໂຄງການຄື: ໂຄງການສະໜອງອຸປະກອນທໍ່ສົ່ງນ້ຳເຂົ້ານາກຸ່ມອາຢູນ ເມືອງດາກຈຶງ; ໂຄງການເຜີຍແຜ່ກົດໝາຍ ແລະ ລະບຽບການຄຸ້ມຄອງ, ການລ້ຽງສັດ ແລະ ການປະມົງ 4 ຕົວເມືອງ; ໂຄງການສົ່ງເສີມການລ້ຽງປາໃນນາເຂົ້າ 4 ບ້ານ ຢູ່ເມືອງ ລະມາມ; ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນແຕ່ແຍກທາງເລກທີ 16 (ບ້ານໂກງຕາຢູນ ຫາ ຫາເຂດຜະລິດບ້ານຫລັກຂາວ) ເມືອງທ່າແຕງ; ໂຄງການສ້ອມແປງປັບປຸງສູນບໍລິການຜ່ານປະຕູດຽວ; ໂຄງການສ້າງຄວາມເຂັ້ມແຂງວຽກງານສົ່ງເສີມການມີສ່ວນຮ່ວມຂອງເດັກ ແລະ ໄວໜຸ່ມໃຫ້ບຸກຄະລາກອນທີ່ເຮັດວຽກກ່ຽວກັບເດັກ; ໂຄງການສ້າງຄວາມເຂັ້ມແຂງທາງດ້ານວຽກງານແຜນການຂັ້ນເມືອງ; ໂຄງການສ້າງຖານຂໍ້ມູນສຳມະໂນທີ່ດິນ ແລະ ອອກໃບແຈ້ງທີ່ດິນ 4 ບ້ານຢູ່ເມືອງທ່າແຕງ; ໂຄງການຮັບຮອງຜົນການປະເມີນ ແລະ ລົງປະເມີນໂຄງການລົງທຶນຂອງລັດ ປີ 2022 (ຕາມຂໍ້ຕົກລົງເລກທີ 197/ຈຂ.ຊກ, ລົງວັນທີ 11 ຕຸລາ 2021); ໂຄງການຊຸກຍູ້ສົ່ງເສີມແຜນພັດທະນາກຸ່ມບ້ານແຈຣະແບບມີສ່ວນຮ່ວມຂອງປະຊາຊົນເມືອງກະລຶມ. ບ້ວງທຶນພັດທະນາຊົນນະບົດມີ 1 ໂຄງການຄື: ໂຄງການສຳຫລວດ ແລະ ວາງແຜນພັດທະນາຈຸດສຸມພັດທະນາຊົນນະບົດໃໝ່ເມືອງກະລຶມ ແລະ ບ້ວງທຶນຈັດສັນພູມລຳເນົາມີ 1 ໂຄງການຄື: ໂຄງການຈັດສັນອາຊີບເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນບ້ານອາຮອງ, ບ້ານໂປມ, ບ້ານອາປຽດ, ບ້ານປະແຫລງ ແລະ ບ້ານຕະຮອງເມືອງ ເມືອງກະລຶມ.

ໂອກາດດັ່ງກ່າວ, ທ່ານ ປອ. ແພງສີ ສີລາວົງ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ຮຽກຮ້ອງໃຫ້ບັນດາພະແນກການ-ຂະແໜງການ ທີ່ເປັນເຈົ້າຂອງໂຄງການລົງທຶນຂອງລັດ ປະຈຳປີ 2021 ຂອງແຂວງ ເອົາໃຈໃສ່ສືບຕໍ່ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໜ້າວຽກທີ່ຍັງຄ້າງໃຫ້ສຳເລັດຕາມລະດັບຄາດໝາຍ ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ.

(ນັກຂ່າວ ສພຂ ແຂວງເຊກອງ)



# ຖະແຫລງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຽງຂວາງ ຊຸດທີ II

(ສພຊ) ໃນວັນທີ 2 ກຸມພາ 2022 ຢູ່ທີ່ພະແນກຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງຊຽງຂວາງ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ຕາງໜ້າຄະນະປະຈຳ ສພຂ ຖະແຫລງຂ່າວກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ເພື່ອແຈ້ງການນຳຂັ້ນຕ່າງໆຂອງແຂວງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວແຂວງຊຽງຂວາງ ໄດ້ຮັບຊາບກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II.

ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ໄດ້ໄຂຂຶ້ນໃນວັນທີ 25 ມັງກອນ 2022 ແລະ ສຳເລັດໃນວັນທີ 26 ມັງກອນ 2022 ເຊິ່ງໄດ້ດຳເນີນເປັນເວລາ 2 ວັນ ຢູ່ທີ່ຫ້ອງປະຊຸມຫ້ອງວ່າການແຂວງຊຽງຂວາງ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະປະຈຳ ສພຂ, ຄະນະປະຈຳພັກແຂວງ ແລະ ການສຸມເຫື່ອແຮງ, ສະຕິປັນຍາ ດ້ວຍຄວາມຮັບຜິດຊອບສູງຂອງບັນດາສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ II, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ແລະ ການປະສານສົມທົບຂອງອົງການປົກຄອງແຂວງ, ອົງການຈັດຕັ້ງພັກ-ລັດ ແລະ ທຸກພາກສ່ວນກ່ຽວຂ້ອງ ຕາມພາລະບົດບາດຂອງຕົນເຂົ້າໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ເຮັດໃຫ້ການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.




ໃນກອງປະຊຸມຄັ້ງນີ້, ນອກຈາກການເຂົ້າຮ່ວມຂອງ ສສຂ, ສສຊ ປະຈຳເຂດເລືອກຕັ້ງແລ້ວ ຍັງມີເຈົ້າແຂວງໆຊຽງຂວາງ, ບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, ຫົວໜ້າ-ຮອງຫົວໜ້າອົງການລັດທຽບເທົ່າຂັ້ນແຂວງ, ພາກສ່ວນກ່ຽວຂ້ອງ ແລະ ແຂກຖືກເຊີນ ເຂົ້າຮ່ວມຈຳນວນ 124 ທ່ານ ຍິງ 32 ທ່ານ.

ກອງປະຊຸມດັ່ງກ່າວ ໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງແຂວງ ລວມມີ 5 ມະຕິຄື: ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການກວດສອບປະຈຳພາກເໜືອກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ແລະ ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວງົບປະມານແຫ່ງລັດ ແລະ ເອກະສານລາຍງານການເງິນລັດວິສາຫະກິດນ້ຳປະປາແຂວງຊຽງຂວາງ ປະຈຳປີ 2020 ແລະ ບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2021 ແລະ ທິດທາງແຜນການປີ 2022 ຂອງອົງການກວດກາລັດແຂວງ;ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງ ສພຂ ປະຈຳປີ 2021 ແລະ ທິດທາງແຜນການ ປີ 2022. ນອກນີ້, ຍັງໄດ້ພິຈາລະນາ ແລະ ຮັບຮອງເອົາ ການສະເໜີກ່ຽວກັບກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ ແລະ ພິຈາລະນາຮັບຮອງເອົາ (ຮ່າງ) ຂໍ້ຕົກລົງວ່າດ້ວຍການປ້ອງກັນ, ຄຸ້ມຄອງ ແລະ ແກ້ໄຂໄພພິບັດຢູ່ແຂວງຊຽງຂວາງ.

ກອງປະຊຸມ ຍັງໄດ້ຮັບຟັງການອະທິບາຍຊີ້ແຈງຈາກເຈົ້າແຂວງໆຊຽງຂວາງ, ຫົວໜ້າ-ຮອງຫົວໜ້າພະແນກການ ແລະ ພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນພະແນກແຜນການ ແລະ ການລົງທຶນແຂວງ, ພະແນກການເງິນແຂວງ, ອົງການກວດສອບປະຈຳພາກເໜືອ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ ຕໍ່ຄຳຊັກຖາມຂອງບັນດາ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ຊຸດທີ II ໄດ້ຍົກຂຶ້ນໃນກອງປະຊຸມ.

ໃນໄລຍະດຳເນີນກອງປະຊຸມໄດ້ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນ ມາເຖິງກອງປະຊຸມ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມພາຍໃນແຂວງ; ຕໍ່ກັບຄຳຄິດດັ່ງກ່າວ, ກອງເລຂາຂອງກອງປະຊຸມໄດ້ສັງລວມ ແລະ ມອບໃຫ້ຄະນະກຳມະການຂອງ ສພຂ ເພື່ອປະສານສົມທົບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າແກ້ໄຂຄຳສະເໜີດັ່ງກ່າວໃຫ້ຖືກຕ້ອງສອດຄ່ອງ ຕາມລະບຽບກົດໝາຍ ແລະ ສົ່ງຜົນການແກ້ໄຂໃຫ້ພາກສ່ວນກ່ຽວຂ້ອງຮັບຊາບ.

ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ, ຂໍຂອບໃຈເຈົ້າແຂວງ, ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນກ່ຽວຂ້ອງທີ່ໄດ້ເຂົ້າຮ່ວມກອງປະຊຸມຈົນສຳເລັດ; ຂໍຂອບໃຈ ບັນດາທ່ານການນຳພັກ-ລັດທຸກຂັ້ນ, ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ ແລະ ປະຊາຊົນ ໃນທົ່ວແຂວງຊຽງຂວາງ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ II ຄັ້ງນີ້.

(ນາງ ສຸກສະຫວັນ ອິນທະແສງ)

## ກອງປະຊຸມຄະນະປະຈຳ ສພຂ ຈຳປາສັກ ປະຈຳເດືອນມັງກອນ

(ສພຊ) ວັນທີ 27 ມັງກອນຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ໄດ້ມີກອງປະຊຸມຄະນະປະຈຳ ສພຂ ປະຈຳເດືອນມັງກອນ ໂດຍການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ປະທານຄະນະປະຈຳ ສພຂ; ມີທ່ານຮອງປະທານຄະນະປະຈຳ, ປະທານຄະນະກຳມະການ ແລະ ຄະນະເລຂາທິການ ສພຂ ຈຳປາສັກ ເຂົ້າຮ່ວມຢ່າງພ້ອມພຽງ.



ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຂອງຄະນະປະຈຳ ສພຂ ປະຈຳເດືອນມັງກອນ 2022 ແລະ ແຜນການເຄື່ອນໄຫວປະຈຳເດືອນກຸມພາ 2022 ຈາກທ່ານ ທິບພະສອນ ສະມາເລີກ ເລຂາທິການສະພາປະຊາຊົນແຂວງ; ບົດສະຫລຸບການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2; ບົດສະຫລຸບງົບປະມານ ປະຈຳປີ 2021, ຮ່າງຄຳແນະນຳຂອງຄະນະປະຈຳ ສພຂ ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2; ຮ່າງແຜນການເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1; ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຈຳປາສັກ ຊຸດທີ II ຈາກຄະນະເລຂາທິການ ສພຂ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມສະຕິປັນຍາຄົ້ນຄວ້າປະກອບຄຳເຫັນ ເພື່ອເຮັດເນື້ອໃນຂອງບັນດາມະຕິຂອງ ສພຂ ມີຄວາມຄົບຖ້ວນສົມບູນ ສາມາດຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດເປັນລວງເລີກ ທັງເປັນການປັບປຸງເນື້ອໃນຂອງເອກະສານຕ່າງໆ ທີ່ນຳເຂົ້າມາຄົ້ນຄວ້າພິຈາລະນາ ໂດຍສະເພາະເນື້ອໃນຂອງບັນດາມະຕິກອງປະຊຸມ ສພຂ ທີ່ໄດ້ຮັບຮອງໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ໃນທ້າຍເດືອນທັນວາ 2021 ຜ່ານມາ.

ຕອນທ້າຍ, ທ່ານ ສາຍທອງ ໄຊຍະວົງ ໄດ້ເນັ້ນໃຫ້ບັນດາຄະນະກຳມະການ ແລະ ຄະນະເລຂາທິການ ສືບຕໍ່ກະກຽມຄວາມພ້ອມໃນການການຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ແລະ ແຜນການເຄື່ອນໄຫວຂອງຕົນ ພ້ອມກັນສຸມໃສ່ວຽກງານໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1, ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຈຳປາສັກ ຊຸດທີ II ເທື່ອທີ 2 ຂອງ ສພຂ ຊຸດທີ II ໃຫ້ສັງຄົມ ແລະ ປະຊາຊົນໄດ້ຮັບຮູ້ຢ່າງກວ້າງຂວາງ.

(ອໍລະດີ ເກດດາ)

## ຕາງໜ້າອົງການໄອຍະການປະຊາຊົນສູງສຸດ ລາຍງານວຽກຕໍ່ ປະທານ ສພຂ

(ສພຊ) ວັນທີ 31 ມັງກອນຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ ໄດ້ຕ້ອນຮັບທ່ານ ນາງ ພອນທິບ ສາວະລີ ຫົວໜ້າກົມກວດກາ ອົງການໄອຍະການປະຊາຊົນສູງສຸດ ພ້ອມດ້ວຍຄະນະ.



ໂອກາດດັ່ງກ່າວ, ທ່ານ ນາງ ພອນທິບ ສາວະລີ ໄດ້ແຈ້ງໃຫ້ຊາບກ່ຽວກັບຈຸດປະສົງ ແລະ ແຜນການເຄື່ອນໄຫວເຮັດວຽກຢູ່ແຂວງອຸດົມໄຊ ຂອງຄະນະທີມງານຈາກອົງການໄອຍະການປະຊາຊົນສູງສຸດ ເຊິ່ງຈະໄດ້ເຜີຍແຜ່ເນື້ອໃນຂອງກອງປະຊຸມໄອຍະການປະຊາຊົນທົ່ວປະເທດ ທີ່ໄດ້ໄຂຂຶ້ນໃນລະຫວ່າງວັນທີ 18-19 ມັງກອນ 2022 ດ້ວຍລະບົບອອນລາຍດ້ວຍຜົນສຳເລັດອັນຈົບງາມ. ນອກນີ້, ຍັງໄດ້ເຊື່ອມຊຶມມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດໃນໄລຍະໃໝ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດຄຳສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ວ່າດ້ວຍການດຳເນີນຄະດີຢາເສບຕິດ ແລະ ການຟອກເງິນ ສະບັບເລກທີ 011/ອອປສ ວ່າດ້ວຍການຈັດຕັ້ງຜັນຂະຫຍາຍຄຳສັ່ງກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ສະບັບເລກທີ 021/ອອປສ, ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນສູງສຸດ

ຕອນທ້າຍ, ປະທານ ສພຂ ໄດ້ສະແດງຄວາມຊົມເຊີຍຄະນະທີມງານຈາກອົງການໄອຍະການປະຊາຊົນສູງສຸດ ຕໍ່ກັບຜົນງານທີ່ຍາດມາໄດ້; ພ້ອມນັ້ນ, ໄດ້ສະເໜີ ແລະ ປຶກສາຫາລືບາງວຽກງານກັບຄະນະທີມງານດັ່ງກ່າວຕື່ມອີກຈຳນວນໜຶ່ງ.

(ນັກຂ່າວ ສພຂ ອຸດົມໄຊ)




**ໝາຍເລກໂທລະສັບສາຍດ່ວນຮັບຄຳຮ້ອງທຸກຄົນເຈັບຂອງໂຮງໝໍມະໂຫສົດ**

- ປະຊາສຳພັນ ແລະບໍລິຫານຍາມ 021 214024.
- ທ່ານ ດຣ. ນາງ ອຸໄດວອນ ລັດຕະນະວົງ ຫົວໜ້າພະແນກບໍລິຫານຄົ້ນຄວ້າ-ສັງລວມ 020 55669358
- ທ່ານ ນາງ ບຸນຫອມ ທອງວິລາວັນ ຫົວໜ້າພະແນກຈັດຕັ້ງພະນັກງານ 020 56709716
- ທ່ານ ນາງ ອາພອນ ວິຊາເທບ ຮອງຜູ້ອຳນວຍການ 020 22204909
- ທ່ານ ຣສ. ດຣ. ອຸ່ນຄຳ ພັນທະລີ ຮອງຜູ້ອຳນວຍການ 020 54198830
- ສຈ. ດຣ. ດວງດາວ ສຸກອາລຸນ ຮອງຜູ້ອຳນວຍການ 020 55682621
- ຣສ. ດຣ. ບຸນທະພານີ ບຸນຊ່ວຍ ຜູ້ອຳນວຍການ 020 56917887



## ສຸກສະບາຍຫາຍໂຣຄາ

# ອັນຕະລາຍຈາກພລາສະຕິກອ່ອນ

#ສາວແວ່ນ



ໃນຖົງຢາງພລາສະຕິກອ່ອນທຸກຊະນິດທີ່ໃຊ້ຫໍ່ຫຸ້ມອາຫານ, ບັດເອທີເອັມ, ຜ້າມ່ານໃນຫ້ອງນໍ້າ ແລະ ອື່ນໆ ມີສານເຄມີທີ່ເອີ້ນວ່າ: ພາທາເລດ (phthalate) ທີ່ຊ່ວຍເພີ່ມຄວາມອ່ອນຂອງວັດຖຸ ເຊິ່ງຖ້າໄດ້ຮັບສານນີ້ເຂົ້າໄປຫລາຍ ຈະເຮັດໃຫ້ມີຄວາມສ່ຽງຕໍ່ຄວາມດັນເລືອດສູງ ໂດຍໄດ້ຮັບການຢືນຢັນການຄົ້ນຄວ້າຂອງສະຖາບັນ Pediatrics ເຊິ່ງໄດ້ເກັບຜົນການທົດສອບຈາກກຸ່ມຕົວຢ່າງຈາກເດັກນ້ອຍອາຍຸ 6-19 ປີ ແລະ ພົບວ່າ ເດັກນ້ອຍທີ່ໄດ້ຮັບສານເຄມີພາທາເລດ ຈະມີຄວາມດັນເລືອດສູງກວ່າເດັກນ້ອຍທີ່ບໍ່ໄດ້ຮັບສານເຄມີນີ້.

ຟັງເບິ່ງຄືວ່າບໍ່ອັນຕະລາຍຫລາຍ ແຕ່ຕົວຈິງແລ້ວມັນເປັນອັນຕະລາຍໃນໄລຍະຍາວ ສານເຄມີນີ້ເຮັດໃຫ້ຮ່າງກາຍເກີດພາວະຄວາມຕຶງຄຽດອັອກຊີເດຊັ່ນ (oxidative stress) ນັ້ນກໍຄືການທີ່ຈຸລັງຖືກສານອະນຸມູນອິດສະຫລະທຳລາຍ ມັນເປັນສາເຫດແຫ່ງພະຍາດຄວາມເສື່ອມຊຳເຮື້ອຫລາຍກວ່າ 70 ຊະນິດ ເຊິ່ງລ້ວນເປັນພື້ນຖານຂອງການເກີດພະຍາດເສັ້ນເລືອດຫົວໃຈ, ມະເຮັງ, ເສັ້ນເລືອດຕີບ, ຄໍ່ອັກເສບ ແລະ ການແຂງຂອງເນື້ອເຍື່ອແດງ; ພະຍາດຄວາມຈຳເສື່ອມ ແລະ ການເສື່ອມສະພາບສະເພາະ.

ນອກນັ້ນ, ພາທາເລດທີ່ຢູ່ໃນພລາສະຕິກຫໍ່ອາຫານ ຍັງຂັດຂວາງການເຮັດວຽກຂອງຕ່ອມຕ່າງໆໃນຮ່າງກາຍ ໂດຍສະເພາະຜູ້ທີ່ມີບັນຫາໂມເລກຸນຕໍ່າໃນເລືອດຢູ່ແລ້ວ ເຊິ່ງຈະພາໃຫ້ເກີດຄວາມຜິດປົກກະຕິຂອງຮໍໂມນ ແລະ ເພີ່ມການເຕີບໂຕຂອງເດັກຍິງ ເຮັດໃຫ້ເຕີບໃຫຍ່ເກີນອາຍຸ ແລະ ຍັງມີສ່ວນເຮັດໃຫ້ເກີດພະຍາດເບົາຫວານ, ສະມາທິສັ້ນ, ພູມແພ້ ແລະ ຫອບຫືດ.

ດັ່ງນັ້ນ, ຖ້າສາມາດຫລີກລ່ຽງຈາກສານເຄມີນີ້ຈະເປັນການດີທີ່ສຸດ ໂດຍຫລີກລ່ຽງການກິນອາຫານສຳເລັດຮູບ ຫລື ອາຫານທີ່ບັນຈຸ ຫລື ຫໍ່ຫຸ້ມດ້ວຍພລາສະຕິກ ແລະ ສຳຄັນທີ່ສຸດບໍ່ຄວນເອົາອາຫານທີ່ຫໍ່ພລາສະຕິກ ແລ້ວນຳເຂົ້າໃນໄມໂຄເວັບ; ຄວນຫັນມາເກັບຮັກສາອາຫານໃສ່ໃນໂຖແກ້ວຈະດີກວ່າ ເສຍສະຫລະຄວາມສະດວກສະບາຍເລັກນ້ອຍ ເພື່ອປ້ອງກັນພະຍາດ ແລະ ເພື່ອສຸຂະພາບທີ່ດີ.

**ຂໍ້ມູນຈາກ: www.sanook.com**

## ສາລາກະວີ

# ກອງໝູນຫລັງ

#ກິໂຕ້ ພະວິເສດ

❄ ພໍ່ແມ່ປຸນປຽບໄດ້
ລູກປຽບເປັນກຳລັງ
ແມ່ທັບບັນຊາລ້ຽງ
ຮັກສາດ່ານເຂດແຄ້ວນ

ນາຍໃຫຍ່ບັນຊາກອງ
ເຫລົ່າທະຫານຄົນກ້າ
ກຳລັງໃຫຍ່ໃຫ້ແຂງແກ່ນ
ບຸດຕາພົ້ນຜ່ານໄພ

❄ ສ່ອງເບິ່ງທາງບອກໃຫ້
ພ້ອມເປັນກຳລັງທຶນ
ເດີນທາງໄປຫລິ່ງກໍ້າ
ຍອມສະຫລະຊີບມ້ອຍ

ຫລີບຫລີກສັດຕູ
ສິ່ງເສີມນຳຍູ້
ນຳຕາມຊູຊ່ວຍ
ຫວັງໃຫ້ລູກສະບາຍ

❄ ຍາມເມື່ອລູກເຄື່ອນຍ້າຍ
ສົ່ງສານຫາກອງໝູນ
ຊອກສັນຫາມາໃຫ້
ຕາມບຸດຫວັງຢາກໄດ້ ໄຖ່ຖົງເງິນເຫືອດແຫ້ງ

ອອກຮົບເພື່ອສຶກສາ
ແລ່ນໄວປານມ້າ
ໄອໂຟນໄອແພັດ
ນາຍກອງວີ້ງແລ່ນຍືມ

❄ ແມ່ນວ່າຄືນຄ່ຳເຊົ້າ
ຍັງອອກແຮງທຳງານ
ຫວັງຍູ້ໜູນເສີມໃຫ້
ອອກສຶກສາໄຝ່ຄົ້ນ

ຕາເວັນອອ່າຍລິງແລງ
ວຽກໜັກປະທັງສູ້
ກຳລັງໃຈເຫລົ່າຮົບ
ຄວາມຮູ້ສາດຕະສິນ

❄ ແມ່ທັບຫວັງບໍ່ສິ້ນ
ຊີວາຄົງມີສຸກ
ຍາມເມື່ອເຫັນບຸດໄດ້
ຂໍໃຫ້ຊຸມລູກເຕົ້າ

ເຫັນລູກຮັບປະລິນຍາ
ຊື່ນໃນມະໂນເນື້ອ
ໃບປະລິນຍາກັບຕ່າວ
ສຶກສາສູ້ເພື່ອ "ກອງ" ແດ່ທ້ອນ

## ເບີໂທສຸກເສີນ

❑ **ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

❑ **ໜ່ວຍກູ້ໄພ**

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ນາຄາ 1513



## ທັກທາຍ ລະບາຍ

# ສຽມທ້ຽນ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❄ *ກະຊວງສາທາລະນະສຸກລາວຢ່າງເປັນທາງການວ່າ* ***ຢາໂມໂລໂກເວຍ***ບໍ່ໃຊ້ເພື່ອປິ່ນປົວພະຍາດໂຄວິດ-19 ເທົ່ານັ້ນ ***ບໍ່ສາມາດປ້ອງກັນການຕິດເຊື້ອໄດ້***ແຕ່ຢ່າງໃດ ໃນສະຫລາກເກືອດຫ້າມ ຕາມລະບຽບສາກົນ ຄົນຖືພາຫລືໃຫ້ນົມ ແກ່ບຸດຕົວນ້ອຍ ຢ່າປ່ອຍໃຫ້ນຳໃຊ້ ກິນໂລເລຜິດສະຫລາກ ***ໃດເດີ!*** ອ່ານຄຳເຕືອນກ່ອນໃຊ້ 18 ປີຂຶ້ນໄປຈຶ່ງໃຫ້ ນຳໃຊ້ເພື່ອປິ່ນປົວ ***(ໂຄວິດ-19)!***

❄ ***ງານ***ກິລາ***ໂອແລັມປິກລະດູໜາວ***ຄັ້ງທີ 24 ໄດ້ໄຂຂຶ້ນທີ່***ນະຄອນປັກກິ່ງ*** ສປຈີນ ຢ່າງເປັນທາງການໃນວັນທີ **4** ແລະ ມີອາລະຍາວໄປຈົນເຖິງທີ ***20 ກຸມພານີ້*** ໂລກາພອນພິກຟື້ນ ປັບປ່ຽນເປັນດີ ຫລັງຈາກມີໄພພິບັດ ກໍການທ່າຮ້າຍ ເປັນການສົ່ງສັນຍານໃຫ້ ທັງໂລກາຮັບຊາບ ວ່າໂຄວິດເລີ່ມພ່າຍແພ້ ພອມຊິຍ້າຍພ່າຍໜີ ***ແລ້ວເດີ!***

❄ ***ກອງ***ປະຊຸມສະໄໝສະມັບ***ເທື່ອທີ 2*** ຂອງສະພາປະຊາຊົນແຂວງໃນຂອບເຂດ***ທົ່ວປະເທດ ໄດ້ເສັດສິ້ນ***ລົງເປັນດ້ວຍຜົນສຳເລັດອັນຈົບງາມ ***ຕາມວາລະ*** ວາງຄາດໝາຍຕໍ່ໜ້າ ຄືເພີຍແຜ່ຜົນງານ ການເຄື່ອນໄຫວເປັນຕົວແທນ ໄພ່ປະຊາຊາວເຊື້ອ ລາວແຕ່ເໜືອເຖິງໃຕ້ ຕາມກົດໝາຍກຳນົດ ສາມພາລະບົດບາດກ່າວໄວ້ ລໍຈົ່ງໄດ້ສຳເລັດຜົນ ***ນັ້ນທ້ອນ!***

## ຊອບຍິ້ມ

# ທ້ອພູ

**ເລື່ອງ: ຮູ້ໃຈແມ່ອີຫລີ**

ມີຄອບຄົວໜຶ່ງມີລູກຊາຍສາມຄົນ ແຕ່ໄປເຮັດວຽກ ແລະ ສ້າງຄອບຄົວຢູ່ຕ່າງແດນ ເມື່ອໃກ້ຈະຮອດວັນເກີດແມ່ຈຶ່ງພາກັນສົນທະນາກັນຊິເອົາຫຍັງໃຫ້ແມ່

**-ລູກຊາຍກົກ:** ຂ້ອຍຊິເຮັດເຮືອນຫລັງໃຫຍ່ໃຫ້ແມ່

**- ລູກຊາຍຄົນກາງ:** ຂ້ອຍຊິຊື້ລົດໃຫຍ່ໃຫ້ແມ່ ພ້ອມຈ້າງຄົນຂັບລົດ

**- ລູກຊາຍຫລ້າ:** ພວກອ້າຍຈື່ໄດ້ບໍ່? ອີ່ແມ່ລາວມັກສູດມົນໄຫວ້ພະ ຂ້ອຍຊິຊື້ນົກແກ້ວຊ່າງເວົ້າຢູ່ອັດໄປໃຫ້ລາວ ນົກແກ້ວໂຕນີ້ຢູ່ວັດມາຫລາຍປີ ມັນຈື່ບົດສວດມົນໄດ້ໝົດ ພຽງແຕ່ບອກບົດໃດ ມັນກໍສາມາດເລົ່າໄດ້ຈົນໝົດ.

ຫລັງຈາກນັ້ນລູກຊາຍສາມຄົນກໍສົ່ງຂອງຂວັນໄປໃຫ້ແມ່ ຕໍ່ມາຜູ້ເປັນແມ່ກໍໄດ້ຂຽນຈົດໝາຍຕອບວ່າ: "ລູກຊາຍກົກ ເຮືອນທີ່ລູກສ້າງໃຫ້ຫລັງໃຫຍ່ເກີນໄປ ແມ່ຢູ່ຫ້ອງດຽວ ແຕ່ໄດ້ອະນາໄມໝົດທັງຫລັງ; ລູກຊາຍກາງ ແມ່ອາຍຸຫລາຍແລ້ວ ບໍ່ຄ່ອຍໄດ້ອອກໄປໃສ ຈຶ່ງບໍ່ຄ່ອຍໄດ້ໃຊ້ລົດ; ລູກຊາຍຫລ້າ ຊົມເຊີຍເດີ.........!!!! ລູກຮູ້ໃຈແມ່ອີຫລີ ນົກແກ້ວທີ່ສົ່ງມາ ລາບແຊບຫລາຍເດີ" !!!!!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າຕັດສິນຕົ້ນໄມ້ທີ່ກຳລັງໃຫຍ່

ຢ່າຕັດສິນໃຜວ່າໂງ່ ໃນຕອນທີ່ເຂົາກຳລັງຮຽນຮູ້

**ກົດໝາຍ ວ່າດ້ວຍການໃຫ້ວັກຊີນກັນພະຍາດ**

ຕໍ່ຈາກສະບັບກ່ອນ...

**ມາດຕາ 57 ການຮັບເອົາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ ຢູ່ດ່ານສາກົນ**

ການຮັບເອົາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະ ຍາດ ຢູ່ດ່ານສາກົນ ພະນັກງານທີ່ກ່ຽວຂ້ອງທີ່ໄດ້ຮັບການມອບໝາຍ ຕ້ອງກວດກາບັນດາເອກະສານຢັ້ງຢືນການ ນຳເຂົ້າ ໃຫ້ຖືກຕ້ອງ, ຄົບຖ້ວນ ເປັນຕົ້ນ ຈຳນວນວັກຊີນ, ສະຫຼາກ, ວັນ, ເດືອນ, ປີ ຜະລິດ ແລະ ວັນໝົດອາຍຸ, ສະພາບການຫຸ້ມຫໍ່ ແລະ ສຸ່ມກວດອ່ານອຸປະກອນຕິດຕາມອຸນຫະພູມ ທີ່ຕິດໃນຫີບວັກຊີນກັນພະຍາດ, ຖ້າພົບເຫັນມີສິ່ງບໍ່ຖືກຕ້ອງຕາມເງື່ອນໄຂໃຫ້ປະຕິເສດການຮັບເອົາວັກຊີນນັ້ນ, ພ້ອມທັງແຈ້ງຜົນການສຸ່ມກວດໃຫ້ພາກ ສ່ວນຮັບຜິດຊອບຮັບຊາບ ແລະ ທົດແທນຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ.

ພາຍຫຼັງກວດກາຖືກຕ້ອງແລ້ວ ຕ້ອງເຄື່ອນຍ້າຍອອກພາຍໃນ ສອງຊົ່ວໂມງ ໃນກໍລະນີການອະນຸມັດເອກະສານຢູ່ດ່ານສາກົນຊັກຊ້າເກີນ ສອງຊົ່ວໂມງ ໃຫ້ອະນຸຍາດນຳເອົາວັກຊີນກັນພະຍາດອອກຈາກສາງດ່ານສາ ກົນກ່ອນ, ຈາກນັ້ນຈຶ່ງດຳເນີນຂັ້ນຕອນເອກະສານ ຕາມພາຍຫຼັງ ເພື່ອຮັບປະກັນຄຸນນະພາບຂອງວັກຊີນ.

**ໝວດທີ 2**
**ການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ**

**ມາດຕາ 58 ການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ**

ລັດ ເປັນຜູ້ສະໜອງວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໃຫ້ພຽງພໍກັບຄວາມຕ້ອງການຂອງກຸ່ມເປົ້າໝາຍ ໃນຂອບເຂດທົ່ວປະເທດຢ່າງທັນການ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ການຮ່ວມມື, ປະ ກອບສ່ວນຊ່ວຍເຫຼືອໃນການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ.

**ມາດຕາ 59 ການກະກຽມ ແລະ ນຳສົ່ງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ**

ໃນການກະກຽມ ຕ້ອງປະກອບບັນດາເອກະສານ ແລະ ສິ່ງຫຸ້ມຫໍ່ ພ້ອມທັງແນະນຳວິທີການຂົນສົ່ງ ກ່ອນນຳສົ່ງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໄປເຖິງເປົ້າໝາຍ ເພື່ອຮັບປະກັນບໍ່ໃຫ້ ເປ່ເພ, ເສຍຫາຍ ຫຼື ເສື່ອມຄຸນນະພາບ.

ໃນການນຳສົ່ງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຕ້ອງຮັບປະກັນໃຫ້ມີຄວາມປອດໄພ ແລະ ໃຫ້ຢູ່ໃນເງື່ອນໄຂທີ່ຄົບຖ້ວນ ເມື່ອໄປເຖິງໜ່ວຍບໍລິການ ແລະ ກຸ່ມເປົ້າໝາຍ.

ການນຳສົ່ງ ຈາກສູນກາງ ຫາ ພາກ ແລະ ຂັ້ນແຂວງ ໃຫ້ປະຕິບັດໃນທຸກ ສອງ ເດືອນ; ແຕ່ແຂວງ ຫາ ຂັ້ນເມືອງ, ແຕ່ຂັ້ນເມືອງ ຫາ ສຸກສາລາ ໃຫ້ປະຕິບັດ ໜຶ່ງຄັ້ງ ຕໍ່ເດືອນ; ສຳລັບການສະໜອງໃຫ້ໜ່ວຍບໍລິການທີ່ຂຶ້ນກັບໂຮງໝໍ ໃຫ້ປະຕິບັດ ໜຶ່ງຄັ້ງ ຕໍ່ເດືອນ.

ໃນກໍລະນີເກີດໄພພິບັດ ຫຼື ການລະບາດຂອງພະຍາດ ໃນເຂດໃດໜຶ່ງ ຊຶ່ງມີຄວາມຈຳເປັນ ຕ້ອງສະໜອງວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໃຫ້ເຂດດັ່ງກ່າວຢ່າງພຽງພໍ ແລະ ທັນການ.

**ພາກທີ VII**
**ຂໍ້ຫ້າມ**

**ມາດຕາ 60 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງ ຫຼື ເມີນເສີຍ ຕໍ່ການເຄື່ອນໄຫວໃຫ້ວັກຊີນກັນພະຍາດ ຂອງພະນັກງານສາທາລະນະສຸກ ທີ່ກ່ຽວຂ້ອງ;

2. ໃຫ້ ຫຼື ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;

3. ບິດເບືອນ, ໂຄສະນາ ເຜີຍແຜ່ ສ້າງຄວາມເສື່ອມເສຍ ຕໍ່ການໃຫ້ວັກຊີນກັນພະຍາດ;

4. ປະຕິເສດການຮັບວັກຊີນກັນພະຍາດ, ການເບິ່ງແຍງດູແລ, ຄຳແນະນຳ ຫຼື ການຊ່ວຍເຫຼືອຂອງ ແພດ, ໝໍ, ຄອບຄົວ ຫຼື ບຸກຄົນອື່ນ;

5. ຈຳແນກ, ລັງກຽດ, ໝິ່ນປະໝາດ ຫຼື ໃສ່ຮ້າຍປ້າຍສີ ຜູ້ໃຫ້ບໍລິການ ຫຼື ຜູ້ຮັບບໍລິການ ວັກຊີນກັນພະຍາດ;

6. ບິດເບືອນ, ຊຸກເຊື່ອງ, ເຊື່ອງອຳ, ປິດບັງ ຂໍ້ມູນກ່ຽວກັບການໃຫ້ ແລະ ຮັບ ວັກຊີນກັນພະຍາດ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

**ມາດຕາ 61 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ໃຫ້ວັກຊີນກັນພະຍາດ**

ຫ້າມພະນັກງານ-ລັດຖະກອນ ໃຫ້ວັກຊີນກັນພະຍາດ ມີ ພຶດຕິກຳດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ຫຼື ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງຖ່ວງດຶງ ຫຼື ຮຽກຮ້ອງເອົາສິນບົນ;

2. ປອມແປງ ຫຼື ອອກເອກະສານ ໂດຍບໍ່ຖືກຕ້ອງ;

3. ນຳໃຊ້ວັກຊີນກັນພະຍາດ ຫຼື ອຸປະກອນການໃຫ້ວັກຊີນກັນພະຍາດທີ່ບໍ່ມີຄຸນະພາບ ຫຼື ບໍ່ໄດ້ມາດຕະຖານ ເປັນຕົ້ນ ໝົດອາຍຸການນຳໃຊ້, ເສຍຄຸນ, ວັກຊີນກັນພະຍາດຊະນິດທີ່ປະສົມນ້ຳລະລາຍ ເກີນ ຫົກ ຊົ່ວໂມງ, ເຂັມແຮງທົ່ວໄປ ທີ່ບໍ່ໄດ້ນຳໃຊ້ເຂົ້າໃນການໃຫ້ວັກຊີນກັນພະຍາດ;

4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຫຼືຂາດຈັນຍາບັນທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ບຸກຄົນອື່ນ;

5. ຮຽກ ຫຼື ທວງ ເອົາ ຄ່າທຳນຽມ, ຄ່າບໍລິການ ຫຼື ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ຫຼື ລະບຽບການ;

6. ຈຳແນກ, ລັງກຽດ, ໝິ່ນປະໝາດ ຫຼື ໃສ່ຮ້າຍປ້າຍສີ ຜູ້ຮັບບໍລິການ ຫຼື ຜູ້ໃຫ້ບໍລິການ ວັກຊີນກັນພະຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ພາກທີ VIII**
**ການແກ້ໄຂຂໍ້ຂັດແຍ່ງ**

**ມາດຕາ 62 ຮູບການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

**ມາດຕາ 63 ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະ ຈາ, ປະນີປະນອມ ຫຼື ໄກ່ເກ່ຍກັນ.

**ມາດຕາ 64 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີ ສາມາດສະເໜີຕໍ່ຂະແໜງ ການສາທາລະນະສຸກ ຫຼື ຂະແໜງການອື່ນ ທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມກົດໝາຍ.

ຂະແໜງການສາທາລະນະສຸກ ຕ້ອງແກ້ໄຂຂໍ້ສະເໜີດັ່ງກ່າວ ພາຍໃນເວລາ ສາມສິບ ວັນ. ຖ້າບໍ່ສາມາດແກ້ໄຂໄດ້ພາຍໃນເວລາດັ່ງກ່າວ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຄູ່ກໍລະນີຮັບຊາບ.

**ມາດຕາ 65 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ໃນການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີ ມີສິດສະເໜີ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 66 ການຕັດສິນຂອງສານປະຊາຊົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີຝ່າຍໃດໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 67 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການໃຫ້ວັກຊີນກັນພະຍາດ ທີ່ມີລັກສະນະສາກົນ, ຄູ່ກໍລະນີ ສາ ມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງ ພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ພາກທີ IX**
**ຄະນະກຳມະການ ກ່ຽວກັບການໃຫ້ວັກຊີນກັນພະຍາດ**

**ມາດຕາ 68 ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ໂດຍແມ່ນຄະນະດຽວກັນກັບ ຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ມີ ສີ່ ລະດັບ ຄື ລະດັບຊາດ, ລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ. ສຳລັບການຈັດຕັ້ງ ຂອງຄະນະກຳມະການໃຫ້ວັກຊີນກັນພະຍາດ ລະດັບຊາດ, ລະດັບແຂວງ ແລະ ລະດັບເມືອງ ແມ່ນການຈັດຕັ້ງດຽວກັນກັບຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແຕ່ລະຂັ້ນ. ສ່ວນລະດັບບ້ານໃຫ້ຖືເອົາຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ ເປັນຜູ້ຮັບຜິດຊອບ.

ນອກຈາກນີ້ ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດຍັງມີ:

1. ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ;

2. ຄະນະກຳມະການກວດກາເຫດການປະຕິປັກທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ.

**ມາດຕາ 69 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບຊາດ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບຊາດ ມີພາລະບົດບາດ ສິດ ແລະ ໜ້າທີ່ໃນການຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ໃນຂອບເຂດທົ່ວປະເທດ.

**ມາດຕາ 70 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບແຂວງ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບແຂວງ ມີພາລະບົດບາດ, ສິດ ແລະ ໜ້າທີ່ ເຂົ້າຮ່ວມຈັດຕັ້ງປະຕິບັດ, ຈັດຕັ້ງຜັນຂະຫຍາຍ ຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ລວມທັງການໂຄສະນາ ເຜີຍແຜ່, ຂົນຂວາຍ, ຊອກຫາທຶນ ແລະ ເຕັກນິກວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

**ມາດຕາ 71 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບເມືອງ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບເມືອງ ມີພາລະບົດບາດ, ສິດ ແລະ ໜ້າທີ່ ເຂົ້າຮ່ວມຈັດຕັ້ງປະຕິບັດ, ຈັດຕັ້ງຜັນຂະຫຍາຍຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ລວມທັງການໂຄສະນາ ເຜີຍແຜ່, ຂົນຂວາຍ, ຊອກຫາທຶນ ແລະ ເຕັກນິກວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

**ມາດຕາ 72 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບບ້ານ**

ຄະນະກຳມະການ ກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບບ້ານ ມີພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້.

**ມາດຕາ 73 ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ**

ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ລັດຖະ

ອ່ານຕໍ່ສະບັບໜ້າ...



**ເຂົ້າໃຈຄຳສັບກົດໝາຍ**

ຄັດໂດຍ: ສ.ສາຍນ້ຳທາ

***ກົດໝາຍ ວ່າດ້ວຍການໃຫ້ວັກຊີນກັນພະຍາດ***

ການອະທິບາຍຄຳສັບ ໃນມາດຕາ 3 ຂອງກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ ມີທັງໝົດ 16 ຂໍ້,

ໜັງສືພິມຜູ້ແທນປະຊາຊົນສະບັບນີ້ ຈະນຳສະເໜີຕໍ່ບັນດາທ່ານຜູ້ອ່ານ 2 ຂໍ້ ແລະ ອີກ 14 ຂໍ້ ຈະພິມໃນສະບັບຕໍ່ໆໄປ.

1. ວັກຊີນ ໝາຍເຖິງຜະລິດຕະພັນທາງການແພດ ທີ່ຜະລິດຈາກເຊື້ອພະຍາດ ແລະ ທາດພິດຂອງພະຍາດ ໂດຍຜ່ານຂະບວນການທາງວິທະຍາສາດ ທີ່ກະຕຸ້ນລະບົບການສ້າງພູມຄຸ້ມກັນຂອງຮ່າງກາຍ;

2. ພູມຄຸ້ມກັນ ໝາຍເຖິງສະພາບຄວາມພ້ອມຂອງຮ່າງກາຍ ທີ່ສາມາດຕ້ານກັບພະຍາດໃດໜຶ່ງໄດ້ດ້ວຍຕົວມັນເອງ.

ອ່ານຕໍ່ສະບັບໜ້າ




# ລັດຖະສະພາຝຣັ່ງ ຜ່ານກົດໝາຍຫລຸດຜ່ອນ ການໃຊ້ສານກັນບູດໃນຊີ້ນແປຮູບ

# ນາງ ປາກາລັກ ພົມມີໄຊ



*ລັດຖະສະພາຝຣັ່ງ ໄດ້ອະນຸມັດກົດໝາຍ ເພື່ອນຳໄປສູ່ການຄວບຄຸມການນຳໃຊ້ສານໄນເຕຣດ (Nitrate) ເຊິ່ງເປັນວັດຖຸເຈືອປົນອາຫານ ເພື່ອຍືດອາຍຸການເກັບຮັກສາໄວ້ໃຫ້ດົນຂຶ້ນ ໃນຊີ້ນແປຮູບທີ່ບໍ່ຜ່ານຄວາມຮ້ອນ.*

ໃນວັນທີ 6 ກຸມພາຜ່ານມາ ໄດ້ມີການລາຍງານຂ່າວວ່າ: ລັດຖະສະພາຝຣັ່ງ ໄດ້ຜ່ານມະຕິເມື່ອອາທິດແລ້ວນີ້ ຮັບຮອງກົດໝາຍວ່າດ້ວຍການຫລຸດຜ່ອນທາດໄນເຕຣດ ໃນຊີ້ນແປຮູບທີ່ບໍ່ຜ່ານຄວາມຮ້ອນ ໂດຍຮຽກຮ້ອງໃຫ້ອົງການທີ່ກ່ຽວຂ້ອງເຮັດບົດລາຍງານການປະເມີນຄວາມສ່ຽງໃຫ້ສຳເລັດພາຍໃນເດືອນມິຖຸນາທີ່ຈະມາເຖິງນີ້.

ຫລັງຈາກນັ້ນ, ລັດຖະບານມີເວລາ 12 ເດືອນ ເພື່ອພິຈາລະນາຂໍ້ມູນທັງໝົດ ເພື່ອກຳນົດວິທີການຫລຸດຜ່ອນປະລິມານ ຫລື ຫ້າມໃຊ້ສານກັນບູດໃນອາຫານດັ່ງກ່າວຢ່າງຖາວອນ ທັງນີ້, ໃນເບື້ອງຕົ້ນມີການຊຸກຍູ້ໃຫ້ກົດໝາຍດັ່ງກ່າວ ມີຜົນບັງຄັບໃຊ້ຢ່າງເຂັ້ມງວດໃນປີ 2023.

ປັດຈຸບັນ, 90% ຂອງຜະລິດຕະພັນຊີ້ນແປຮູບບໍ່ຜ່ານຄວາມຮ້ອນທີ່ຈຳໜ່າຍຢູ່ປະເທດຝຣັ່ງ ມີສ່ວນປະກອບທາດໄນເຕຣດ ເຊິ່ງນອກຈາກຈະຊ່ວຍຍືດອາຍຸການເກັບຮັກສາແລ້ວ ຍັງເຮັດໃຫ້ຊີ້ນມີສີບົວງາມເມື່ອຖືກຄວາມຮ້ອນ ແຕ່ໃນສອງສາມປີຜ່ານມາ ບໍລິສັດຜະລິດອາຫານຂະໜາດໃຫຍ່ຈຳນວນຫລາຍໃນປະເທດຝຣັ່ງ ແລະ ບັນດາປະເທດເອີຣົບອື່ນໆ ໄດ້ເລີ່ມທົດລອງຜະລິດຕະພັນຊີ້ນແປຮູບທີ່ບໍ່ມີທາດໄນເຕຣດຈຳນວນໜຶ່ງແລ້ວ.

ຢ່າງໃດກໍຕາມ, ກົດໝາຍສະບັບນີ້ ຈະສົ່ງຜົນກະທົບຕໍ່ຜູ້ປະກອບການຂະໜາດນ້ອຍ ທີ່ຍັງບໍ່ສາມາດແປຮູບຜະລິດຕະພັນຊີ້ນສັດຂອງຕົນເອງໄດ້ໂດຍບໍ່ມີຄວາມຮ້ອນທີ່ປາສະຈາກທາດໄນເຕຣດໄດ້ ເຊິ່ງຈະສົ່ງຜົນໃຫ້ອາຍຸການເກັບຮັກສາຂອງອາຫານບໍ່ໄດ້ດົນເທົ່າເມື່ອກ່ອນ ແລະ ເພີ່ມຄວາມສ່ຽງຕໍ່ການເຕີບໂຕຂອງເຊື້ອແບັກທີເຣຍອີກດ້ວຍ.

**ແຫລ່ງຂ່າວ: Daily News**




# ລັດຖະສະພາອົດສະຕຣາລີ ກຳລັງຫາລືການເປີດປະເທດ ຮັບນັກທ່ອງທ່ຽວ

# ນາກ ເມືອງມະໂນ

ອີງຕາມການລາຍງານຂ່າວໃນວັນຈັນທີ 7 ກຸມພາ 2022 ໃຫ້ຮູ້ວ່າ: ທ່ານ ສະກັອດ ມໍຣິສັນ ນາຍົກລັດຖະມົນຕີອົດສະຕຣາລີ ກ່າວວ່າ: ອົດສະຕຣາລີ ອາດຈະເປີດຊາຍແດນຕ້ອນຮັບນັກທ່ອງທ່ຽວອີກຄັ້ງໃນໄວໆນີ້ ເຊິ່ງລັດຖະສະພາຈະປຶກສາຫາລືກ່ຽວກັບບັນຫາດັ່ງກ່າວໃນອາທິດນີ້.

ລາຍງານກ່າວວ່າ: ກອງປະຊຸມລັດຖະສະພາອົດສະຕຣາລີ ຄັ້ງທຳອິດຂອງປີ 2022 ໄດ້ເປີດຂຶ້ນໃນວັນທີ 7 ກຸມພານີ້, ທ່ານ ສະກັອດ ມໍຣິສັນ ກ່າວວ່າ: “ພວກເຮົາຫວັງວ່າຈະບັນລຸການຕັດສິນໃຈເປີດຊາຍແດນເພື່ອຕ້ອນຮັບນັກທ່ອງທ່ຽວຕ່າງປະເທດເຂົ້າມາໃນອົດສະຕຣາລີອີກຄັ້ງ ໂດຍເນັ້ນໜັກດ້ານຄວາມປອດໄພ ແລະ ຄວາມເປັນໄປໄດ້, ເຊື່ອວ່າຈະເກີດຂຶ້ນໃນໄວໆນີ້”.

ເຖິງວ່າຈະມີການແຜ່ລະບາດຂອງພະຍາດໂຄວິດ-19 ຊະນິດໂອໄມຄຣອນ ຈະສືບຕໍ່ເກີດຂຶ້ນໃນອົດສະຕຣາລີ ແຕ່ອັດຕາການເຂົ້າໂຮງໝໍ ແລະ ການເສຍຊີວິດຍັງຄົງທີ່.

ອົດສະຕຣາລີ ໄດ້ປິດຊາຍແດນປະເທດຕັ້ງແຕ່ເດືອນມີນາ 2020 ເຊິ່ງໄດ້ເລີ່ມຜ່ອນຜັນມາດຕະການໃນສອງສາມເດືອນຜ່ານມາ ໂດຍເລີ່ມຕົ້ນດ້ວຍການອະນຸຍາດໃຫ້ພົນລະເມືອງ ແລະ ຜູ້ທີ່ອາໄສຢູ່ພາຍໃນປະເທດ ລວມທັງແຮງງານທີ່ມີທັກສະ, ນັກສຶກສາຕ່າງປະເທດ ແລະ ແຮງງານຕາມລະດູການບາງປະເພດ ໃຫ້ສາມາດເດີນທາງໄປອົດສະຕຣາລີໄດ້.

**ແຫລ່ງຂ່າວ: RYT9**






